# ສາລະບານ

**ໝວດທີ 1 ບົດບັນຍັດທົ່ວໄປ**

ມາດຕາ 1 ຈຸດປະສົງ....................1

ມາດຕາ 2 ຢາປາບສັດຕູພືດ....................1

ມາດຕາ 3 ການອະທິບາຍຄໍາສັບ....................2

ມາດຕາ 4 ນະໂຍບາຍ ຂອງລັດກ່ຽວກັບຢາປາບສັດຕູພືດ....................3

ມາດຕາ 5 ຫຼັກການປະຕິບັດກ່ຽວກັບວຽກງານຢາປາບສັດຕູພືດ....................3

ມາດຕາ 6 ການຮ່ວມມືສາກົນ....................4

ມາດຕາ 7 ຂອບເຂດການນໍາໃຊ້ດໍາລັດ....................4

**ໝວດທີ 2 ການຂຶ້ນທະບຽນຢາປາບສັດຕູພືດ**

ມາດຕາ 8 ການຂຶ້ນທະບຽນຢາປາບສັດຕູພືດ....................4

ມາດຕາ 9 ຢາປາບສັດຕູພືດ ທີ່ບໍ່ອະນຸຍາດຂຶ້ນທະບຽນ....................4

ມາດຕາ 10 ຢາປາບສັດຕູພືດ ທີ່ຍົກເວັ້ນການຂຶ້ນທະບຽນ....................5

ມາດຕາ 11 ເງື່ອນໄຂການຂຶ້ນທະບຽນຢາປາບສັດຕູພືດ....................5

ມາດຕາ 12 ການພິຈາລະນາຄໍາຮ້ອງຂໍຂຶ້ນທະບຽນຢາປາບສັດຕູພືດ....................6

ມາດຕາ 13 ການທົດສອບຢາປາບສັດຕູພືດ....................7

ມາດຕາ 14 ໃບທະບຽນຢາປາບສັດຕູພືດ....................7

ມາດຕາ 15 ການອອກໃບທະບຽນຢາປາບສັດຕູພືດຄືນໃໝ່....................8

ມາດຕາ 16 ການໂຈະ ແລະ ການຖອນໃບທະບຽນຢາປາບສັດຕູພືດ....................8

**ໝວດທີ 3 ກິດຈະການກ່ຽວກັບຢາປາບສັດຕູພືດ**

ມາດຕາ 17 ກິດຈະການກ່ຽວກັບຢາປາບສັດຕູພືດ....................9

ມາດຕາ 18 ພາຊະນະບັນຈຸ ແລະ ການຫຸ້ມຫໍ່ຢາປາບສັດຕູພືດ....9
ມາດຕາ 19 ສະຫຼາກ ແລະ ການຕິດສະຫຼາກ....9
ມາດຕາ 20 ການໂຄສະນາ....10
ມາດຕາ 21 ການຜະລິດ....10
ມາດຕາ 22 ການນຳເຂົ້າ....10
ມາດຕາ 23 ການສົ່ງອອກ....11
ມາດຕາ 24 ການຂົນສົ່ງ....11
ມາດຕາ 25 ການສົ່ງຜ່ານ....12
ມາດຕາ 26 ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ....12
ມາດຕາ 27 ການນຳໃຊ້....12
ມາດຕາ 28 ການຕິດຕາມ ແລະ ລາຍງານກ່ຽວກັບຢາປາບສັດຕູພືດ....13
ມາດຕາ 29 ການບຳບັດ ແລະ ກຳຈັດຢາປາບສັດຕູພືດ....13
ມາດຕາ 30 ການພັດທະນາວຽກງານດ້ານຢາປາບສັດຕູພືດ....14
ມາດຕາ 31 ການສົ່ງເສີມຢາຊີວະພາບປາບສັດຕູພືດ....14
**ໝວດທີ 4 ການດຳເນີນທຸລະກິດຢາປາບສັດຕູພືດ**
ມາດຕາ 32 ການດຳເນີນທຸລະກິດ....14
ມາດຕາ 33 ເງື່ອນໄຂການດຳເນີນທຸລະກິດຢາປາບສັດຕູພືດ....15
ມາດຕາ 34 ປະເພດທຸລະກິດ ຢາປາບສັດຕູພືດ....15
ມາດຕາ 35 ທີ່ປຶກສາດ້ານຢາປາບສັດຕູພືດ....15
ມາດຕາ 36 ການຜະລິດຢາປາບສັດຕູພືດ....16
ມາດຕາ 37 ການນຳເຂົ້າ ແລະ ຈຳໜ່າຍ ຢາປາບສັດຕູພືດ....16
ມາດຕາ 38 ການບໍລິການດ້ານຢາປາບສັດຕູພືດ....16

ມາດຕາ 39 ການບາບັດ ແລະ ກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ .....17

ມາດຕາ 40 ການວິໄຈ ແລະ ທົດສອບຢາປາບສັດຕູພືດ .....17

ມາດຕາ 41 ການໂຈະ ແລະ ການຖອນທະບຽນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ.....17

ມາດຕາ 42 ພັນທະຂອງຜູ່ ດຳເນີນທຸລະກິດ ຢາປາບສັດຕູພືດ.....18

**ໝວດທີ 5 ການຄຸ້ມຄອງ ຢາປາບສັດຕູພືດ**

ມາດຕາ 43 ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ.....18

ມາດຕາ44 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຢາປາບສັເດຕູພືດແຕ່ລະຂັ້ນ.....19

ມາດຕາ 45 ອົງການ ຄຸ້ມຄອງ ຢາປາບສັດຕູພືດ.....19

ມາດຕາ 46 ສິດ ແລະ ໜ້າທີ່ຂອງ ກະຊວງກະສິກຳ ແລະ ປ່າໄມ້.....20

ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.....21

ມາດຕາ 48 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ.....22

ມາດຕາ 49 ສິດ ແລະ ໜ້າທີ່ ຂອງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ.....22

**ໝວດທີ 6 ການກວດກາ**

ມາດຕາ 50 ການກວດກາຢາປາບສັດຕູພືດ .....23

ມາດຕາ 51 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ .....23

ມາດຕາ 52 ການດຳເນີນການກວດກາຢາປາບສັດຕູພືດ .....24

ມາດຕາ 53 ການພິຈາລະນາຜົນການກວດກາ ແລະ ການແກ້ໄຂ.....25

**ໝວດທີ 7 ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ມາດຕາ 54 ງົບປະມານ.....26

ມາດຕາ 55 ເງິນທີ່ປັບໃໝ ຫຼື ຂາຍຢາປາບສັດຕູພືດທີ່ໄດ້ຮິບມາ.....26

ມາດຕາ 56 ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ຢາປາບສັດຕູພືດ.....26

**ໝວດທີ 8 ຂໍ້ຫ້າມ**

ມາດຕາ 57 ຂໍ້ຫ້າມທົ່ວໄປ....................26

ມາດຕາ 58 ຂໍ້ຫ້າມສໍາລັບຜູ່ປະກອບການ....................27

ມາດຕາ 59 ຂໍ້ຫ້າມສໍາລັບຜູ່ນໍາໃຊ້....................28

ມາດຕາ 60 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ....................28

**ໝວດທີ 9 ນະໂຍບາຍຕໍ່ຜູ່ມີຜົນງານ ແລະ ມາດຕະການຕໍ່ຜູ່ລະເມີດ**

ມາດຕາ 61 ນະໂຍບາຍຕໍ່ຜູ່ມີຜົນງານ....................29

ມາດຕາ 62 ມາດຕະການຕໍ່ຜູ່ລະເມີດ....................29

ມາດຕາ 63 ມາດຕະການຕໍ່ການກະທໍາຜິດສະຖານເບົາ....................29

ມາດຕາ 64 ມາດຕະການຕໍ່ການກະທໍາຜິດສະຖານໜັກ....................30

ມາດຕາ 65 ມາດຕະການໂທດເພີ່ມ....................31

**ໝວດທີ 10 ບົດບັນຍັດສຸດທ້າຍ**

ມາດຕາ 66 ການຈັດຕັ້ງປະຕິບັດ....................31

ມາດຕາ 67 ຜົນສັກສິດ....................32

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ** **ເລກທີ /ລບ**

**ນະຄອນຫຼວງວຽງຈັນ, ວັນທີ**

**(ຮ່າງ)**

# ດຳລັດ

# ວ່າດ້ວຍ ຢາປາບສັດຕູພືດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ ລົງວັນທີ

## ລັດຖະບານ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ, ກວດກາ, ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກ່ຽວກັບຢາປາບສັດຕູພືດ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພຂອງຢາປາບສັດຕູພືດຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ແນໃສ່ເຮັດໃຫ້ກະສິກຳສະອາດ, ຮັບປະກັນຜົນຜະລິດພືດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມແບບຍືນຍົງ.

**ມາດຕາ 2 ຢາປາບສັດຕູພືດ**

ຢາປາບສັດຕູພືດ ແມ່ນ ທາດເຄມີ ທາດດ່ຽວ, ທາດປະສົມ ຫຼື ຊີວະພາບ ທີ່ມີເປົ້າໝາຍເພື່ອນຳໃຊ້ຂັບໄລ່, ທຳລາຍ ຫຼື ຄວບຄຸມສັດຕູພືດ ແລະ ບັນດາພາຫະນຳເຊື້ອພະຍາດ ທີ່ມີຜົນກະທົບຕໍ່ສຸຂະພາບຂອງຄົນ. ນອກນີ້, ຍັງມີເປົ້າໝາຍ ເພື່ອຄວບຄຸມ ການຈະເລີນເຕີບໂຕຂອງພືດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັດຕູພືດ** ໝາຍເຖິງ ພືດ, ແມງໄມ້, ສັດ ຫຼື ເຊື້ອຈຸລິນຊີ ເຊັ່ນ ໄວຣັດ, ເຫັດລາ, ແບັກທີເຣຍ, ກາຝາກ ແລະ ເຊື້ອພະຍາດອື່ນ ທີ່ສ້າງຄວາມເສຍຫາຍ ແກ່ພືດ, ຜະລິດຕະພັນພືດ ແລະ ສິ່ງແວດລ້ອມ.
2. **ພາຫະນຳເຊື້ອພະຍາດ** ໝາຍເຖິງ ສິ່ງທີ່ມີຊີວິດໃດໜຶ່ງ ທີ່ເປັນຕົວນຳພາເຊື້ອພະຍາດມາສູ່ຄົນ ເປັນຕົ້ນ ແມ່ນ ໜູ, ແມງສາບ, ຍຸງ ແລະ ອື່ນໆ.
3. **ຢາປາບສັດຕູພືດ ທີ່ຫ້າມນຳໃຊ້** ໝາຍເຖິງ ຢາປາບສັດຕູພືດ ຊຶ່ງຖືກຫ້າມສຳລັບທຸກການ ນຳໃຊ້ ໂດຍ ລະບຽບການ, ເພື່ອປົກປ້ອງສຸຂະພາບຂອງຄົນ, ສັດ ແລະ ປົກປັກຮັກສາສິ່ງແວດລ້ອມ. ໃນນີ້ ຍັງລວມທັງ ຢາປາບສັດຕູພືດ ຊຶ່ງຖືກປະຕິເສດ ຈາກການຮັບຮອງໃຫ້ນຳໃຊ້, ຫຼື ຍົກເລີກ ການຈຳ ໜ່າຍ ໂດຍຜູ້ຜະລິດ ຫຼື ຈາກອົງການທີ່ກ່ຽວຂ້ອງ.
4. **ຢາປາບສັດຕູພືດປອມ** ໝາຍເຖິງ ຜະລິດຕະພັນທີ່ຜະລິດ ແລະ ຫຸ້ມຫໍ່ຄ້າຍຄືກັບ ຜະລິດຕະພັນທີ່ໄດ້ ຂຶ້ນທະບຽນ ແຕ່ມີສ່ວນປະກອບ ເປັນຕົ້ນ ສານອອກລິດ, ເຄື່ອງໝາຍການຄ້າ, ບໍ່ກົງກັບສະຫຼາກ ແລະ ປອມແປງສະຫຼາກ;
5. **ຢາປາບສັດຕູພືດທີ່ບໍ່ໄດ້ມາດຕະຖານ** ໝາຍເຖິງ ຢາປາບສັດຕູພືດ ທີ່ຜະລິດຂຶ້ນ ໂດຍມີສານອອກລິດ ໜ້ອຍ ຫຼື ຫຼາຍກວ່າ ທີ່ໄດ້ຂຶ້ນທະບຽນໄວ້, ຢາປາບສັດຕູພືດ ທີ່ມີສິ່ງເຈືອປົນ ຫຼື ລັກສະນະອື່ນ ທີ່ບໍ່ ຖືກຕ້ອງຕາມມາດຕະຖານທີ່ກຳນົດ.
6. **ຢາປາບສັດຕູພືດເສຍຄຸນລັກສະນະ** ໝາຍເຖິງ ຢາປາບສັດຕູພືດທີ່ໝົດອາຍຸການນຳໃຊ້ ຕາມທີ່ສະແດງ ໄວ້ໃນສະຫຼາກ ແລະ ເປັນຢາປາບສັດຕູພືດ ທີ່ປ່ຽນສະພາບຈາກລັກສະນະເດີມເປັນຕົ້ນ ຈັບກັນເປັນ ກ້ອນ, ປ່ຽນສີ ແລະ ລັກສະນະອື່ນ.
7. **ການກຳຈັດຢາປາບສັດຕູພືດ** ໝາຍເຖິງ ການຈູດ, ການຝັງດິນ ຫຼື ວິທີການປະຕິບັດໃດໜຶ່ງ ເພື່ອທຳລາຍ ຫຼື ແຍກປ່ຽວສິ່ງເສດເຫຼືອ ຂອງຢາປາບສັດຕູພືດ, ພາຊະນະບັນຈຸທີ່ໃຊ້ແລ້ວ ແລະ ສິ່ງປົນເປື້ອນດ້ວຍຢາ ປາບສັດຕູພືດ;
8. **ສິ່ງເສດເຫຼືອຢາປາບສັດຕູພືດ** ໝາຍເຖິງ ສິ່ງເສດເຫຼືອຈາກກິດຈະການ ແລະ ການດຳເນີນທຸລະກິດກ່ຽວ ກັບຢາປາບສັດຕູພືດ ເປັນຕົ້ນ ພາຊະນະບັນຈຸ, ຢາປາບສັດຕູພືດເສຍຄຸນລັກສະນະ, ຢາປາບສັດຕູພືດ ຕົກຄ້າງ ແລະ ວັດຖຸຕ່າງໆ ກ່ຽວກັບຢາປາບສັດຕູພືດ;
9. **ການບຳບັດຢາປາບສັດຕູພືດ** ໝາຍເຖິງ ຂະບວນການຫຼຸດຜ່ອນມົນລະພິດ ທີ່ເກີດຈາກກິດຈະການ ແລະ ການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ ດ້ວຍການນຳໃຊ້ເຕັກນິກ, ເຄື່ອງຈັກ ຫຼື ວັດຖູ ອຸປະກອນຕ່າງໆເຂົ້າໃນການບຳບັດ;
10. **ສູດຢາປາບສັດຕູພືດ** ໝາຍເຖິງ ການປະສົມຈາກທາດ ຫຼື ວັດຖຸດິບຫຼາຍຊະນິດ ເພື່ອເຮັດໃຫ້ຜະລິດຕະ ພັນ ມີປະສິດທິພາບ ສຳລັບເປົ້າໝາຍ ຂອງຜູ້ນຳໃຊ້;

11. **ສານອອກລິດ** ໝາຍເຖິງ ສ່ວນປະກອບໃດໜຶ່ງຂອງຢາປາບສັດຕູພືດ ທີ່ເຮັດໃຫ້ຢາປາບສັດຕູພືດ ອອກລິດ ໃນການຂັບໄລ່, ທຳລາຍ ຫຼື ຄວບຄຸມສັດຕູພືດ, ພາຫະນຳເຊື້ອພະຍາດ ແລະ ການຈະເລີນເຕີບໂຕຂອງພືດ.
12. **ສານພິດຕົກຄ້າງ** ໝາຍເຖິງ ສານປະກອບສະເພາະໃດໜຶ່ງຂອງຢາປາບສັດຕູພືດ ທີ່ຕົກຄ້າງຢູ່ໃນພືດ, ດິນ, ນ້ຳ, ອາຫານ, ສິນຄ້າກະສິກຳ, ອາຫານສັດ ທີ່ເກີນຄ່າມາດຕະຖານທີ່ກຳນົດໂດຍອີງການ ອາຫານ ແລະ ການກະເສດ ຫຼື ລະບຽບການທີ່ກ່ຽວຂ້ອງກຳນົດໄວ້.
13. **ຢາຊີວະພາບປາບສັດຕູພືດ** ໝາຍເຖິງ ເຊື້ອຈຸລິນຊີ, ທາດເຄມີ-ຊີວະພາບ ແລະ ສານສະກັດຈາກພືດ ທີ່ນຳໃຊ້ ເພື່ອຫຼຸດຜ່ອນປະຊາກອນຂອງສັດຕູພືດ;
14. **ການປ້ອງກັນພືດແບບປະສົມປະສານ** ໝາຍເຖິງ ການຄວບຄຸມສັດຕູພືດ ດ້ວຍການລວມເອົາ ວິທີການຕ່າງໆ ທີ່ເໝາະສົມ ເພື່ອສະກັດກັ້ນ ການຂະຫຍາຍຕົວຂອງປະຊາກອນສັດຕູພືດ ເພື່ອຫຼຸດຜ່ອນການນຳໃຊ້ຢາປາບສັດຕູພືດ ຫຼື ຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ. ນອກນີ້ ການປ້ອງກັນພືດແບບປະສົມປະສານ ແມ່ນ ເນັ້ນໃສ່ຫຼັກການປູກພືດໃຫ້ສົມບູນແຂງແຮງ ໂດຍບໍ່ມີຜົນກະທົບຕໍ່ລະບົບນິເວດ ແລະ ຊຸກຍູ້ ກົນໄກການຄວບຄຸມສັດຕູພືດໂດຍທຳມະຊາດ.

**ມາດຕາ 4 ນະໂຍບາຍ ຂອງລັດກ່ຽວກັບຢາປາບສັດຕູພືດ**

ລັດສົ່ງເສີມວຽກງານຢາປາບສັດຕູພືດ ດ້ວຍການວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ການກໍ່ສ້າງພື້ນຖານໂຄງລ່າງ, ການບຳລຸງ - ສ້າງບຸກຄະລາກອນ, ການສຶກສາ, ຄົ້ນຄວ້າ, ທົດລອງ, ພັດທະນາ ແລະ ຖ່າຍທອດເຕັກໂນໂລຊີ ກ່ຽວກັບຢາປາບສັດຕູພືດ ແລະ ຊຸກຍູ້ການປ້ອງກັນພືດ ແບບປະສົມປະສານ.

ລັດຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການດຳເນີນທຸລະກິດຢາປາບສັດຕູພືດ ທີ່ບໍ່ເປັນອັນຕະລາຍ ແລະ ນຳໃຊ້ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ດ້ວຍການສະໜອງຂໍ້ມູນຂ່າວສານ, ຊ່ວຍເຫຼືອດ້ານເຕັກນິກ - ວິຊາການ, ສິນເຊື່ອ, ນະໂຍບາຍພາສີ ແລະ ອາກອນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 ຫຼັກການປະຕິບັດກ່ຽວກັບວຽກງານຢາປາບສັດຕູພືດ**

ຫຼັກການປະຕິບັດກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ປອດໄພຕໍ່ສຸຂະພາບຂອງພືດ, ຄົນ, ສັດ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
4. ຖືກຕ້ອງຕາມມາດຕະຖານ ເຕັກນິກ ແລະ ຫຼັກການຂອງສາກົນ;
5. ສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ລວມທັງອົງການຈັດຕັ້ງສາກົນ ກ່ຽວກັບຢາປາບສັດຕູພືດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການປະຕິບັດສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 7 ຂອບເຂດການນຳໃຊ້ດຳລັດ**

ດຳລັດ ສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກິດຈະການ ແລະ ທຸລະກິດ ກ່ຽວກັບຢາປາບສັດຕູພືດ ຫຼື ສ່ວນປະກອບ ແລະ ເຄື່ອງມືອຸປະກອນກ່ຽວກັບຢາປາບສັດຕູພືດຢູ່ໃນ ສປປ ລາວ.

## ໝວດທີ 2

## ການຂຶ້ນທະບຽນຢາປາບສັດຕູພືດ

**ມາດຕາ 8 ການຂຶ້ນທະບຽນຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ໂຄສະນາຢາປາບສັດຕູພືດ ຕ້ອງໄດ້ຂຶ້ນທະບຽນຢາປາບສັດຕູພືດຈາກອົງການຄຸ້ມຄອງຢາປາບສັດຕູພືດ.

ການຂຶ້ນທະບຽນຢາປາບສັດຕູພືດ ມີ ຂັ້ນຕອນ ດັ່ງນີ້:

1. ຍື່ນຄຳຮ້ອງຂໍຂຶ້ນທະບຽນ;
2. ພິຈາລະນາຄຳຮ້ອງຂໍຂຶ້ນທະບຽນ;
3. ກວດສອບຄຸນນະພາບ;
4. ກວດສອບປະສິດທິພາບ;
5. ອອກໃບທະບຽນ ແລະ ບັນທຶກເຂົ້າໄວ້ໃນບັນຊີອະນຸຍາດ.

**ມາດຕາ 9 ຢາປາບສັດຕູພືດ ທີ່ບໍ່ອະນຸຍາດຂຶ້ນທະບຽນ**

ຢາປາບສັດຕູພືດ ທີ່ບໍ່ອະນຸຍາດຂຶ້ນທະບຽນ ມີ ດັ່ງນີ້:

1. ຢາປາບສັດຕູພືດ ທີ່ຢູ່ໃນບັນຊີ ຍົກເລີກ ຫຼື ຫ້າມນຳໃຊ້ ໃນ ສປປ ລາວ;
2. ຢາປາບສັດຕູພືດ ທີ່ສ້າງຜົນກະທົບຮ້າຍແຮງ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
3. ຢາປາບສັດຕູພືດ ຈັດໃນລະດັບຄວາມເປັນພິດ ຮ້າຍແຮງ ລະດັບ I ບົນພື້ນຖານ ລະບົບການຈັດລະດັບ ແລະ ການຕິດສະຫຼາກເຄມີ ຂອງສາກົນ, ຍົກເວັ້ນຢາປາບສັດຕູພືດ ທີ່ໃຊ້ໃນການຣົມ, ສີດພົ່ນຂ້າເຊື້ອ; ນຳໃຊ້ໃນອຸດສາຫະກຳປຸງແຕ່ງໄມ້, ກຳຈັດປວກ ແລະ ໜູ;

4. ຢາປາບສັດຕູພືດ ທີ່ມີຊື່ການຄ້າຄ້າຍຄືກັບຢາປົວຄົນ ຫຼື ຢາປົວສັດ ທີ່ມີບັນຊີຢາທີ່ອະນຸຍາດໃຊ້ໃນ ສປປ ລາວ;
5. ຢາປາບສັດຕູພືດ ທີ່ມີສ່ວນປະສົມຂອງ ເມທິນໂບຣໄມດ໌ ຫຼື ສານອອກລິດ ທີ່ຈັດໃນລະດັບຄວາມເປັນພິດຮ້າຍແຮງ ລະດັບ I.

ລາຍການລະອຽດກ່ຽວກັບຢາປາບສັດຕູພືດທີ່ ບໍ່ອະນຸຍາດຂຶ້ນທະບຽນ ແມ່ນກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 10 ຢາປາບສັດຕູພືດ ທີ່ຍົກເວັ້ນການຂຶ້ນທະບຽນ

ຢາປາບສັດຕູພືດ ທີ່ຍົກເວັ້ນການຂຶ້ນທະບຽນ ມີດັ່ງນີ້:

1. ຢາປາບສັດຕູພືດ ນໍາໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ທົດລອງ, ວາງສະແດງ, ຊ່ວຍເຫຼືອ, ແລະ ຮັບໃຊ້ພາຍໃນໂຄງການໃດໜຶ່ງຂອງລັດຖະບານ ນໍາເຂົ້າ ເພື່ອນໍາໃຊ້ສຸກເສີນ ເມື່ອມີສັດຕູພືດລະບາດ;
2. ຢາປາບສັດຕູພືດຈັດໃນລະດັບຄວາມເປັນພິດຮ້າຍແຮງ ລະດັບ I ທີ່ນໍາເຂົ້າມາໃຊ້ເປັນຕົວຢ່າງມາດຕະຖານ;
3. ຢາປາບສັດຕູພືດ ທີ່ນໍາເຂົ້າຊົ່ວຄາວ ແລະ ສົ່ງອອກຕໍ່ ຫຼື ນໍາເຂົ້າເພື່ອຜະລິດແລ້ວສົ່ງອອກ ຕາມສັນຍາລົງທຶນ ລະຫວ່າງ ຜູ້ລົງທຶນພາຍໃນ ກັບຕ່າງປະເທດ;
4. ຢາຊີວະພາບປາບສັດຕູພືດ ແລະ ຢາເຄມີປາບສັດຕູພືດ ອື່ນ ທີ່ມີຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ ໂດຍອີງການຄຸ້ມຄອງຢາປາບສັດຕູພືດໃນແຕ່ລະໄລຍະ;

ຢາປາບສັດຕູພືດ ທີ່ໄດ້ຮັບການຍົກເວັ້ນຂ້າງເທິງນັ້ນ ຕ້ອງໄດ້ຮັບການອະນຸຍາດ, ຄຸ້ມຄອງ ແລະ ກວດກາ ຈາກກະຊວງກະສິກໍາ ແລະ ປ່າໄມ້.

ກະຊວງກະສິກໍາ ແລະ ປ່າໄມ້ ຕ້ອງທົບທວນບັນຊີຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນໍາໃຊ້ ແລະ ກໍານົດຢາປາບສັດຕູພືດ ທີ່ຫ້າມນໍາໃຊ້ໃນ ສປປ ລາວ ໃນແຕ່ລະປີ ພ້ອມທັງແຈ້ງບັນຊີ ແລະ ການປ່ຽນແປງບັນຊີດັ່ງກ່າວ ໃຫ້ກອງເລຂາທິການ ສົນທິສັນຍາ ລອດເຕີດໍາ ແລະ ອົງການຈັດຕັ້ງສາກົນອື່ນ ທີ່ກ່ຽວຂ້ອງລວມທັງປະເທດຄູ່ການຄ້າຕາມການຮ້ອງຂໍ. ບັນຊີຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນໍາໃຊ້ ໃນ ສປປ ລາວ ຕ້ອງມີຂໍ້ມູນກ່ຽວກັບຊື່ການຄ້າ, ຊື່ສາມັນ, ສານອອກລິດ ແລະ ອັດຕາການນໍາໃຊ້, ລະດັບຄວາມເປັນອັນຕະລາຍ, ສັດຕູພືດ ແລະ ພືດເປົ້າໝາຍ, ໄລຍະເວລາໃຫ້ຢຸດນໍາໃຊ້ກ່ອນເກັບກ່ຽວພືດ ແລະ ຜູ້ຂຶ້ນທະບຽນ.

## ມາດຕາ 11 ເງື່ອນໄຂການຂຶ້ນທະບຽນຢາປາບສັດຕູພືດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນຢາປາບສັດຕູພືດ ຕ້ອງມີເງື່ອນໄຂດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ທີ່ດຳເນີນທຸລະກິດກ່ຽວກັບການຜະລິດຢາປາບສັດຕູພືດ ໃນ ສປປ ລາວ;
2. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງປະເທດ ທີ່ດຳເນີນທຸລະກິດຜະລິດຢາປາບສັດຕູພືດ ຊຶ່ງມີຕົວແທນ ດຳເນີນທຸລະກິດດ້ານຢາປາບສັດຕູພືດ ໃນ ສປປ ລາວ;
3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຕົວແທນດຳເນີນທຸລະກິດດ້ານຢາປາບສັດຕູພືດ ໃນ ສປປ ລາວ ແລະ ໄດ້ຮັບການມອບສິດຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກຳນົດໄວ້ ໃນຂໍ້ 1 ແລະ 2 ຂອງມາດຕານີ້;
4. ຢາປາບສັດຕູພືດ ທີ່ໄດ້ຂຶ້ນທະບຽນຈາກປະເທດສົ່ງອອກ;
5. ມີຂໍ້ມູນຄົບຖ້ວນ ກ່ຽວກັບຄຸນລັກສະນະ ແລະ ຄວາມປອດໄພ ຂອງຢາປາບສັດຕູພືດ ຕາມທີ່ກຳນົດໄວ້ໃນ ລະບຽບການສະເພາະຂອງອົງການຄຸ້ມຄອງຢາປາບສັດຕູພືດ;
6. ມີເງື່ອນໄຂຮັບຜິດຊອບໃນການທົດສອບຢາປາບສັດຕູພືດ ເພື່ອຂໍຂຶ້ນທະບຽນ.

ລາຍລະອຽດສຳລັບຂັ້ນຕອນການສະເໜີ ແລະ ປະກອບເອກະສານ ຂຶ້ນທະບຽນຢາປາບສັດຕູພືດ ແມ່ນກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 12 ການພິຈາລະນາຄຳຮ້ອງຂໍຂຶ້ນທະບຽນຢາປາບສັດຕູພືດ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນຢາປາບສັດຕູພືດ, ອົງການຄຸ້ມຄອງຢາປາບສັດຕູພືດ ຕ້ອງຄົ້ນຄວ້າພິຈາລະນາ ແລະ ສະເໜີໃຫ້ ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ຮັບຮອງພາຍໃນ 10 ວັນ ເພື່ອແຈ້ງຜົນໄດ້ຮັບ ໃຫ້ຜູ້ສະເໜີຊາບ, ຖ້າບໍ່ສາມາດຮັບຮອງເອົາໄດ້ ກໍຕ້ອງແຈ້ງຄືນເປັນລາຍລັກອັກສອນ.

ການພິຈາລະນາ ແລະ ຮັບຮອງຄຳຮ້ອງຂໍຂຶ້ນທະບຽນໃຫ້ອີງໃສ່ຫຼັກການພື້ນຖານ ດັ່ງນີ້:

1. ຄວາມເໝາະສົມຂອງຈຸດປະສົງຂອງການນຳໃຊ້, ຄວາມຈຳເປັນ ແລະ ປະສິດທິພາບ ຂອງຜະລິດຕະພັນ;
2. ຄວາມອັນຕະລາຍ ແລະ ຄວາມສ່ຽງ ຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ຜູ່ນຳໃຊ້, ຂອງສັດ, ສິ່ງແວດລ້ອມ;
3. ວິທີການ ແລະ ເງື່ອນໄຂຂອງການນຳໃຊ້ ແລະ ປັດໄຈທີ່ພົວພັນກັບຄວາມສ່ຽງ;
4. ປະຫວັດຄວາມເປັນມາ ແລະ ບັນຫາທີ່ເກີດຂຶ້ນ ຈາກການນຳໃຊ້ ໃນປະເທດອື່ນ;
5. ວິທີການປະຕິບັດອື່ນ ທີ່ປ່ຽນແທນ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກການນຳໃຊ້;
6. ຄຸນນະພາບຂອງຜະລິດຕະພັນ ແລະ ຜົນການທົດສອບພາກສະໜາມ;
7. ລະດັບການຄົງຕົວຂອງຢາປາບສັດຕູພືດ ແລະ ອາຍຸຂອງສານພິດຕົກຄ້າງໃນຜະລິດຕະພັນ ແລະ ສິ່ງແວດລ້ອມ;
8. ການຕ້ານທານຂອງແມງໄມ້ສັດຕູພືດ ຕໍ່ຢາປາບສັດຕູພືດແມ່ນໃນລະດັບຕໍ່າ;
9. ການຫຸ້ມຫໍ່ ແລະ ເນື້ອໃນສະຫຼາກທີ່ຖືກຕ້ອງ.

**ມາດຕາ 13 ການທົດສອບຢາປາບສັດຕູພືດ**

ການທົດສອບຢາປາບສັດຕູພືດ ທີ່ຈະຂຶ້ນທະບຽນໃນ ສປປ ລາວ ຕ້ອງໄດ້ຜ່ານການວິໄຈຄຸນນະພາບຢາປາບສັດຕູພືດ ແລະ ທົດສອບປະສິດທິພາບ ການນຳໃຊ້, ຜົນກະທົບຕໍ່ພືດ ແລະ ການຕົກຄ້າງ ຂອງຢາປາບສັດຕູພືດ ດ້ວຍວິທີການ, ໃນໄລຍະເວລາ ແລະ ພື້ນທີ່ ຕາມເງື່ອນໄຂ ຂອງກະຊວງກະສິກຳ ແລະ ປ່າໄມ້. ສຳລັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການວິໄຈ ແລະ ທົດສອບປະສິດທິພາບ ແມ່ນພາລະຂອງຜູ້ສະເໜີຂໍຂຶ້ນທະບຽນຢາປາບສັດຕູພືດ ຕາມລະບຽບການ.

ການທົດສອບຢາປາບສັດຕູພືດ ແມ່ນການທົດສອບໃນພາກສະໜາມ ແລະ ໃນຫ້ອງທົດລອງ ທີ່ດຳເນີນໂດຍສູນ, ສະຖານີຂອງລັດ ຫຼື ທຸລະກິດວິໄຈໃດໜຶ່ງ ທີ່ໄດ້ຮັບອະນຸຍາດ ຈາກກະຊວງກະສິກຳ ແລະ ປ່າໄມ້.

ໃບຢັ້ງຢືນຜົນການທົດສອບຢາປາບສັດຕູພືດ ມີອາຍຸນຳໃຊ້ໄດ້ 03 ປີ ແລະ ໃຫ້ນຳໃຊ້ສະເພາະການຂຶ້ນທະບຽນຢາປາບສັດຕູພືດ ແລະ ບໍ່ອະນຸຍາດໃຫ້ຜູ້ອື່ນນຳໄປໃຊ້.

**ມາດຕາ 14 ໃບທະບຽນຢາປາບສັດຕູພືດ**

ໃບທະບຽນຢາປາບສັດຕູພືດ ແມ່ນເອກະສານທາງການ ຊຶ່ງອອກໃຫ້ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ຕາມແຕ່ລະກໍລະນີດັ່ງນີ້:

1. **ໃບທະບຽນຢາປາບສັດຕູພືດຊົ່ວຄາວ** ອອກໃຫ້ໃນກໍລະນີ ຢາປາບສັດຕູພືດທີ່ຈະຖືກຜະລິດຂຶ້ນ ຫຼື ນຳເຂົ້າປະເທດ ເປັນຄັ້ງທຳອິດ, ພາຍຫຼັງການປະເມີນຄວາມສ່ຽງ ແລະ ກຳລັງຢູ່ໃນຂັ້ນຕອນດຳເນີນການທົດສອບປະສິດທິພາບ, ໜ່ວຍງານທະບຽນ ຕ້ອງຂຶ້ນທະບຽນຊົ່ວຄາວເປັນໄລຍະເວລາ 01 ປີ ຕາມເງື່ອນໄຂທີ່ກຳນົດສະເພາະສຳລັບ ຢາປາບສັດຕູພືດ ທີ່ສະເໜີຂໍຂຶ້ນທະບຽນ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ;
2. **ໃບທະບຽນຢາປາບສັດຕູພືດຖາວອນ** ອອກໃຫ້ໃນກໍລະນີ ຜູ້ທີ່ໄດ້ຮັບໃບທະບຽນຊົ່ວຄາວສາມາດປະຕິບັດຕາມເງື່ອນໄຂທີ່ກຳນົດສະເພາະ ໂດຍຜ່ານການຮັບຮອງຈາກຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ. ອາຍຸຂອງໃບຂຶ້ນທະບຽນຖາວອນ ແມ່ນ 03 ປີ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ;
3. **ໃບທະບຽນຢາປາບສັດຕູພືດຊ້ຳກັນ** ອອກໃຫ້ໃນກໍລະນີ ທີ່ມີການສະເໜີຂໍຂຶ້ນທະບຽນຊ້ຳກັບຜະລິດຕະພັນທີ່ໄດ້ຂຶ້ນທະບຽນຖາວອນ ແຕ່ຕ້ອງໄດ້ຮັບການຕົກລົງ ເປັນລາຍລັກອັກສອນຈາກຜູ້ຂຶ້ນທະບຽນເດີມ. ອາຍຸຂອງໃບຂຶ້ນທະບຽນຊ້ຳ ແມ່ນຄືກັນກັບການຂຶ້ນທະບຽນຖາວອນ.

ເຈົ້າຂອງໃບທະບຽນທັງ 3 ປະເພດ ທີ່ກ່າວມາຂ້າງເທິງນັ້ນ, ມີຈຸດປະສົງຕ້ອງການຕໍ່ອາຍຸຂອງໃບທະບຽນໃຫ້ສະເໜີຄຳຮ້ອງ ພ້ອມທັງຄັດຕິດໃບທະບຽນຢາປາບສັດຕູພືດທີ່ໝົດອາຍຸ, ສະຫຼາກຢາປາບສັດຕູພືດ ແລະ ບົດລາຍງານການເຄື່ອນໄຫວກິດຈະການ ເຖິງກະຊວງກະສິກຳ ແລະ ປ່າໄມ້ ກ່ອນວັນໝົດອາຍຸ 60 ວັນ. ອົງການຄຸ້ມຄອງຢາປາບສັດຕູພືດ ຕ້ອງອອກໃບທະບຽນຢາປາບສັດຕູພືດ ພາຍໃນ 10 ວັນ ນັບແຕ່ວັນທີ່ຮັບຄຳຮ້ອງ, ໃນກໍລະນີປະຕິເສດການຂໍຕໍ່ໃບທະບຽນ ແມ່ນຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ເປັນລາຍລັກອັກ ສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 15 ການອອກໃບທະບຽນຢາປາບສັດຕູພືດຄືນໃໝ່**

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງອອກໃບທະບຽນຢາປາບສັດຕູພືດຄືນໃໝ່ ໃນກໍລະນີດັ່ງນີ້:

1. ໃບທະບຽນເດີມທີ່ອອກໃຫ້ ເສຍຫາຍ, ຖືກທຳລາຍ ຫຼື ຂໍ້ມູນບໍ່ຖືກຕ້ອງ;
2. ຊື່ການຄ້າຂອງຢາປາບສັດຕູພືດ, ຂໍ້ມູນກ່ຽວກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີການປ່ຽນແປງ ຕາມການສະເໜີຈາກເຈົ້າຂອງໃບທະບຽນຢາປາບສັດຕູພືດ.

ເຈົ້າຂອງໃບທະບຽນຢາປາບສັດຕູພືດ ທີ່ມີຈຸດປະສົງຂໍໃບທະບຽນຄືນໃໝ່ໃຫ້ສະເໜີຄຳຮ້ອງ ພ້ອມທັງຄັດຕິດໃບຢັ້ງຢືນການປ່ຽນແປງຂອງເນື້ອໃນ ແລະ ໃບທະບຽນເດີມ ເຖິງກະຊວງກະສິກຳ ແລະ ປ່າໄມ້.

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງອອກໃບທະບຽນຢາປາບສັດຕູພືດ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ຮັບຄຳຮ້ອງ, ໃນກໍລະນີປະຕິເສດການຂໍໃບທະບຽນຄືນໃໝ່ ແມ່ນຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 16 ການໂຈະ ແລະ ການຖອນໃບທະບຽນຢາປາບສັດຕູພືດ**

ອີງການຄຸ້ມຄອງຢາປາບສັດຕູພືດ ຕ້ອງລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ຊາບ ເພື່ອຄົ້ນຄວ້າ ແລະ ສະເໜີໃຫ້ ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ພິຈາລະນາຮັບຮອງການ ໂຈະ ແລະ ຖອນ ໃບທະບຽນຢາປາບສັດຕູພືດ ພ້ອມທັງຍົກເລີກອອກຈາກບັນຊີອະນຸຍາດນຳໃຊ້ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຂຶ້ນທະບຽນ ຂໍຖອນໃບທະບຽນ;
2. ຢາປາບສັດຕູພືດ ທີ່ບໍລິສັດ, ອົງການຈັດຕັ້ງ ທີ່ສະເໜີຖອນອອກຈາກບັນຊີ;
3. ມີການລະເມີດ ດຳລັດສະບັບນີ້ ຫຼື ລະບຽບກົດໝາຍ ທີ່ກ່ຽວຂ້ອງຢ່າງຮ້າຍແຮງ ໂດຍຜູ້ຖືໃບທະບຽນ ຫຼື ຕົວແທນທີ່ຖືກມອບໝາຍ;
4. ກວດພົບເອກະສານປອມ ແລະ ຂໍ້ມູນບໍ່ເປັນຄວາມຈິງໃນສຳນວນເອກະສານຂໍຂຶ້ນທະບຽນ;
5. ມີການປ່ຽນແປງຂໍ້ມູນ ໃນໃບທະບຽນຢາປາບສັດຕູພືດທີ່ອອກໃຫ້;
6. ມີຂໍ້ມູນອັນໃໝ່ ກ່ຽວກັບ ຢາປາບສັດຕູພືດ ບໍ່ມີປະສິດທິພາບ ຫຼື ເຫັນວ່າສັດຕູພືດເປົ້າໝາຍມີຄວາມຕ້ານທານຕໍ່ຢາປາບສັດຕູພືດ ຫຼື ມີຄວາມສ່ຽງ ຕໍ່ຄວາມປອດໄພຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
7. ຢາປາບສັດຕູພືດທີ່ຍົກເລີກການນຳໃຊ້;
8. ໃບທະບຽນໝົດອາຍຸ.

## ໝວດທີ 3

## ກິດຈະການກ່ຽວກັບຢາປາບສັດຕູພືດ

### ມາດຕາ 17  ກິດຈະການກ່ຽວກັບຢາປາບສັດຕູພືດ

ກິດຈະການກ່ຽວກັບຢາປາບສັດຕູພືດ ແມ່ນມາດຕະການຕ່າງໆ ທີ່ນໍາໃຊ້ ເພື່ອພັດທະນາ ແລະ ຄວບຄຸມຢາປາບສັດຕູພືດ ໃຫ້ມີຄວາມປອດໄພ ເປັນຕົ້ນ ພາຊະນະບັນຈຸ ແລະ ການຫຸ້ມຫໍ່ຢາປາບສັດຕູພືດ, ການຕິດສະຫຼາກ, ການໂຄສະນາ, ການຜະລິດ, ການນໍາເຂົ້າ, ການສົ່ງອອກ, ການສົ່ງຜ່ານ, ການຂົນສົ່ງ, ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ, ການນໍາໃຊ້, ການບໍາບັດ ແລະ ກໍາຈັດຢາປາບສັດຕູພືດ, ການພັດທະນາວຽກງານຢາປາບສັດຕູພືດ, ການສົ່ງເສີມຢາຊີວະພາບປາບສັດຕູພືດ.

### ມາດຕາ 18  ພາຊະນະບັນຈຸ ແລະ ການຫຸ້ມຫໍ່ຢາປາບສັດຕູພືດ

ພາຊະນະບັນຈຸ ແລະ ການຫຸ້ມຫໍ່ ລວມທັງຢາປາບສັດຕູພືດຫຸ້ມຫໍ່ຄືນໃໝ່ ຕ້ອງຮັບປະກັນ ດັ່ງນີ້:

1. ມີຄວາມແຂງແກ່ນ, ທົນທານ ແລະ ຮັບປະກັນບໍ່ໃຫ້ຮົ່ວຊຶມ;
2. ບໍ່ເປື່ອຍ ແລະ ບໍ່ສົ່ງຜົນກະທົບຕໍ່ຄຸນນະພາບ ຂອງຢາປາບສັດຕູພືດ ພາຍໃຕ້ສະພາບປົກກະຕິຂອງການເກັບຮັກສາ ແລະ ນໍາໃຊ້ ໃນໄລຍະເວລາທີ່ໄດ້ກໍານົດ;
3. ບໍ່ຄືກັບພາຊະນະບັນຈຸ ແລະ ການຫຸ້ມຫໍ່ອາຫານ ແລະ ເຄື່ອງດື່ມອື່ນ;
4. ຕິດສະຫຼາກ ທີ່ມີຂໍ້ແນະນໍາ ສໍາລັບການນໍາໃຊ້ທີ່ຈະແຈ້ງ ແລະ ຫຼຸດຜ່ອນມາດຕະການຄວາມສ່ຽງ;
5. ອອກແບບຝາປິດ ເພື່ອປ້ອງກັນບໍ່ໃຫ້ເດັກນ້ອຍເປີດ;
6. ເໝາະສົມກັບແຕ່ລະປະເພດຜະລິດຕະພັນຢາປາບສັດຕູພືດ;
7. ມີຄວາມປອດໄພໃນເວລາເກັບຮັກສາ ແລະ ນໍາໃຊ້ ທີ່ບໍ່ສ້າງຄວາມອັນຕະລາຍຕໍ່ສຸຂະພາບຂອງຄົນ ຫຼື ສິ່ງແວດລ້ອມ;
8. ເປັນພາຊະນະບັນຈຸ ແລະ ການຫຸ້ມຫໍ່ ລວມທັງຢາປາບສັດຕູພືດຫຸ້ມຫໍ່ຄືນໃໝ່ ຖືກຕ້ອງຕາມມາດຕະຖານ ຂອງກະຊວງກະສິກໍາ ແລະ ປ່າໄມ້ ທີ່ກໍານົດໄວ້.

### ມາດຕາ 19 ສະຫຼາກ ແລະ  ການຕິດສະຫຼາກ

ຢາປາບສັດຕູພືດ ທຸກຊະນິດ ທີ່ນໍາເຂົ້າ ສປປ ລາວ ຕ້ອງມີ ສະຫຼາກ ທີ່ໃຫ້ຂໍ້ມູນເປັນ ຮູບພາບ ຫຼື ເປັນຕົວອັກສອນ ພາສາລາວ ແລະ / ຫຼື ພາສາອັງກິດ ເພື່ອ ຊີ້ບອກຄວາມເປັນອັນຕະລາຍຂອງຢາປາບສັດຕູພືດ ຕາມທີ່ກໍານົດໄວ້ໃນ ດໍາລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຮັບປະກັນ ປະສິດທິພາບ ແລະ ຄວາມປອດໄພ ໃນການເຄື່ອນຍ້າຍ, ເກັບຮັກສາ ແລະ ການນໍາໃຊ້.

ຢາປາບສັດຕູພືດ ຕ້ອງຕິດສະຫຼາກ, ແນບ, ຫ້ອຍ ຫຼື ພິມໃສ່ກັບພາຊະນະບັນຈຸ ຢາປາບສັດຕູພືດໂດຍກົງ ແລະ ຕ້ອງຕິດໃຫ້ມີຄວາມແໜ້ນໜາ, ທົນທານ ແລະ ໝັ້ນໜຽວ.

**ມາດຕາ 20 ການໂຄສະນາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໂຄສະນາກ່ຽວກັບຢາປາບສັດຕູພືດ ຕ້ອງຂໍອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ, ຂະແໜງການຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ ຕາມກົດໝາຍ ແລະ ລະບຽບການ.

ການໂຄສະນາ ໃຫ້ຖືກຕ້ອງກັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ສຳລັບເນື້ອໃນການໂຄສະນາ ຕ້ອງຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ຂອງປະເພດ, ຊະນິດ, ຄຸນລັກສະນະ, ຄຸນນະພາບ ຂອງຢາປາບສັດຕູພືດ, ເຄື່ອງໝາຍການຄ້າ, ການບໍລິການ, ຄວາມເປັນອັນຕະລາຍ ແລະ ມາດຕະ ການປ້ອງກັນຄວາມປອດໄພ.

**ມາດຕາ 21 ການຜະລິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຜະລິດຢາປາບສັດຕູພືດ ຕ້ອງປະຕິບັດຕາມຂໍ້ກຳນົດ ໃນມາດຕາ 32 ແລະ ມາດຕາ 36 ຂອງດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ຢາຊີວະພາບປາບສັດຕູພືດ ທີ່ຜະລິດເພື່ອນຳໃຊ້ໃນກິດຈະການຂອງຕົນ ທີ່ບໍ່ເປັນການຈຳໜ່າຍ ຫຼື ແຈກຢາຍບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ແລະ ເຕັກນິກວິຊາການທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດໄວ້ ແລະ ແຈ້ງໃຫ້ອົງການຄຸ້ມຄອງຢາປາບສັດຕູພືດຊາບ.

**ມາດຕາ 22 ການນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າຢາປາບສັດຕູພືດ ທີ່ໄດ້ຂຶ້ນທະບຽນໃນ ສປປ ລາວ ແລະ ຢາປາບສັດຕູພືດ ທີ່ໄດ້ຮັບການຍົກເວັ້ນ ຕາມມາດຕາ 10 ຂອງດຳລັດສະບັບນີ້ ຕ້ອງເປັນຜູ້ດຳເນີນທຸລະກິດຢາປາບສັດຕູພືດ ແລະ ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງຢາປາບສັດຕູພືດ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ການນຳເຂົ້າຢາປາບສັດຕູພືດ ທີ່ຈັດຢູ່ໃນຄວາມເປັນອັນຕະລາຍປະເພດ IV ຂອງບັນຊີອະນຸຍາດນຳໃຊ້ ສາມາດນຳເຂົ້າໄດ້ໂດຍບໍ່ຕ້ອງຂໍອະນຸຍາດ ແຕ່ຕ້ອງໄດ້ຮັບການກວດກາ ຈາກເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ການນຳເຂົ້າຢາປາບສັດຕູພືດ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຮັບປະກັນ ການຫຸ້ມຫໍ່, ຕິດສະຫຼາກ ແລະ ຂົນສົ່ງຢາປາບສັດຕູພືດ ມີຄວາມປອດໄພ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ ມາດຕາ 24 ຂອງດຳລັດສະບັບນີ້;
2. ຮັບປະກັນຄຸນນະພາບ ຂອງຢາປາບສັດຕູພືດທີ່ນຳເຂົ້າ ແລະ ກ່ອນໝົດອາຍຸການນຳໃຊ້ 2 ປີ;
3. ນຳເຂົ້າຕາມດ່ານ ທີ່ກຳນົດໃຫ້ໃນໃບອະນຸຍາດນຳເຂົ້າສະເພາະ ແລະ ໄດ້ຮັບການກວດກາ ຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຢາປາບສັດຕູພືດ ຈາກເຈົ້າໜ້າທີ່ກ່ຽວຂ້ອງ;
4. ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ກຳນົດໄວ້ແຕ່ລະໄລຍະ.

**ມາດຕາ 23 ການສົ່ງອອກ**

ຢາປາບສັດຕູພືດ ທີ່ຈະສົ່ງອອກ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ, ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂຂອງປະເທດນຳເຂົ້າ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 24 ການຂົນສົ່ງ**

ການຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອ ທີ່ນຳໃຊ້ ແບບຄົວເຮືອນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຫຼີກເວັ້ນການນຳໃຊ້ພາຫະນະຂົນສົ່ງມວນຊົນ ແລະ ການຂົນສົ່ງທາງນ້ຳ;
2. ມີການຈັດວາງ, ຫຸ້ມຫໍ່ພາຊະນະບັນຈຸ, ປິດແຈບ ແລະ ປອດໄພ ໂດຍແຍກອອກຈາກ ເຄື່ອງບໍລິໂພກ, ສິ່ງທີ່ມີຊີວິດ ແລະ ສິ່ງອື່ນ;
3. ຜູ້ຂັບຂີ່ ຕ້ອງມີປະສົບການໃນການຂົນສົ່ງຢາປາບສັດຕູພືດ ແລະ ຄວາມຮູ້ພື້ນຖານໃນການປ້ອງກັນ ແລະ ແກ້ໄຂໄພອັນຕະລາຍທີ່ເກີດຂຶ້ນຈາກຢາປາບສັດຕູພືດ.

ສຳລັບການຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອ ທີ່ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຜະລິດ ແລະ ຈຳໜ່າຍ ຫຼື ນຳໃຊ້ໃນການລົງທຶນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຜູ້ຂັບລົດຕ້ອງມີປະສົບການ ແລະ ຄວາມຮູ້ພື້ນຖານ ກ່ຽວກັບລະບຽບການ, ການປ້ອງກັນ ແລະ ຮັກສາຄວາມປອດໄພ ກ່ຽວກັບຢາປາບສັດຕູພືດ;
2. ມີຄູ່ມື, ອຸປະກອນປ້ອງກັນຄວາມປອດໄພ ແລະ ຮູ້ວິທີການປະຖົມພະຍາບານເບື້ອງຕົ້ນ;
3. ຕ້ອງຂົນສົ່ງຢາປາບສັດຕູພືດ ຕາມເສັ້ນທາງ  ແລະ ເຖິງປາຍທາງທີ່ກຳນົດໃຫ້ໃນໃບອະນຸຍາດ;
4. ການນຳເຂົ້າ ແລະ ຈຳໜ່າຍ ຕ້ອງມີສຳເນົາໃບອະນຸຍາດ ແລະ ເອກະສານທີ່ກ່ຽວຂ້ອງ ຈາກຜູ້ດຳເນີນທຸລະກິດ ທີ່ເປັນເຈົ້າຂອງນຳສົ່ງໄປພ້ອມກັບຢາປາບສັດຕູພືດ;
5. ຕູ້ຂົນສົ່ງຢາປາບສັດຕູພືດ ຕ້ອງປິດແຈບ ແລະ ມີປ້າຍເຕືອນອັນຕະລາຍ;
6. ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງກະສິກຳ ແລະ ປ່າໄມ້ ທີ່ໄດ້ກຳນົດໄວ້ແຕ່ລະໄລຍະ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີເກີດອຸປະຕິເຫດ ຫຼື ການຮົ່ວໄຫຼ ໃນລະຫວ່າງການຂົນສົ່ງຢາປາບສັດຕູພືດ ຜູ້ບໍລິການຂົນສົ່ງຕ້ອງແຈ້ງ ຕໍ່ອົງການຄຸ້ມຄອງຢາປາບສັດຕູພືດທີ່ຢູ່ໃກ້ສຸດໃນທັນໃດ ເພື່ອຫາວິທີແກ້ໄຂສຸກເສີນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍກ່ຽວກັບການບຳບັດ ແລະ ກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ.

**ມາດຕາ 25 ການສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂົນສົ່ງຢາປາບສັດຕູພືດຜ່ານ ສປປ ລາວ ຕ້ອງແຈ້ງໃຫ້ ອົງການຄຸ້ມຄອງຢາປາບສັດຕູພືດຊາບລ່ວງໜ້າ ຢ່າງໜ້ອຍ 30 ວັນ ແລະ ໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຕ້ອງຮັບປະກັນ ຄວາມປອດໄພ ໃນການຂົນສົ່ງ, ຫຼີກເວັ້ນການຮົ່ວຊຶມ ຂອງພາຊະນະບັນຈຸ ຫຼື ການແຜ່ກະຈາຍ ເຮັດໃຫ້ເປັນອັນຕະລາຍ ຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໃນ ມາດຕາ 26 ຂອງດຳລັດສະບັບນີ້;
2. ປະຕິບັດຕາມ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ແລະ ສົນທິສັນຍາ ກ່ຽວກັບການສົ່ງຜ່ານ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 26 ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເກັບຮັກສາ ແລະ ມີໄວ້ໃນຄອບຄອງ ຢາປາບສັດຕູພືດຕາມເງື່ອນໄຂດັ່ງນີ້:

1. ການເກັບຮັກສາຢາປາບສັດຕູພືດ ເພື່ອນຳໃຊ້ ຈະຕ້ອງແຍກຈາກວັດຖຸອື່ນ ແລະ ໃຫ້ປະຕິບັດຕາມຄຳແນະນຳສຳລັບການເກັບຮັກສາ ທີ່ຂຽນໄວ້ໃນສະຫຼາກຢາປາບສັດຕູພືດ;
2. ສາງເກັບມ້ຽນສະເພາະຢາປາບສັດຕູພືດ, ຕ້ອງຫ່າງໄກຈາກເດັກນ້ອຍ, ຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນໍ້າ, ຖືກຕ້ອງຕາມມາດຕະຖານເຕັກນິກ ເພື່ອຮັກສາຄຸນນະພາບຂອງຢາປາບສັດຕູພືດ, ມີລະບົບການເກັບຮັກສາ ທີ່ປອດໄພ ລວມທັງມາດຕະການບົວລະບັດຮັກສາ, ມາດຕະການປ້ອງກັນ ແລະ ກຳຈັດຄວາມເປັນພິດ, ອັກຄີໄພ, ບັນທຶກຂໍ້ມູນ ການເກັບຮັກສາ ຢາປາບສັດຕູພືດ ແລະ ລາຍງານເປັນປົກກະຕິໃຫ້ອົງການຄຸ້ມຄອງຢາປາບສັດຕູພືດຊາບ;
3. ໃນກໍລະນີມີເກີດການຮົ່ວໄຫຼ ຫຼື ອຸບັດຕິເຫດ ໃນເວລາເກັບຮັກສາ ຜູ້ຮັບຜິດຊອບຕ້ອງລາຍງານໃຫ້ອົງການຄຸ້ມຄອງຢາປາບສັດຕູພືດ ທີ່ຢູ່ໃກ້ສຸດຊາບ ເພື່ອນຳໃຊ້ມາດຕະການທີ່ຈຳເປັນໃນການແກ້ໄຂຜົນກະທົບ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ.

ມາດຕະຖານເຕັກນິກ, ລະບຽບການເກັບຮັກຮັກສາ ແລະ ມີໄວ້ໃນຄອບຄອງຢາປາບສັດຕູພືດ ຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 ການນຳໃຊ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ ຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນໃນ ສປປ ລາວ ຕ້ອງເອົາໃຈໃສ່ປະຕິບັດຕາມເຕັກນິກວິຊາການ ແລະ ເງື່ອນໄຂ ດັ່ງນີ້:

1. ຢາປາບສັດຕູພືດທີ່ບໍ່ນອນຢູ່ໃນບັນຊີຫ້າມນຳໃຊ້ໃນ ສປປ ລາວ ແລະ ຈັດຢູ່ໃນຄວາມເປັນອັນຕະລາຍປະເພດ I ;
2. ຢາປາບສັດຕູພືດ ຕ້ອງນຳໃຊ້ເທົ່າທີ່ຈຳເປັນ ໂດຍປະຕິບັດຕາມຫຼັກການ ປ້ອງກັນພືດ ແບບປະສົມປະສານ ເພື່ອຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດ;
3. ຄັດເລືອກຢາປາບສັດຕູພືດ ທີ່ເໝາະສົມ ສຳລັບ ນຳໃຊ້ເຂົ້າໃນການກຳຈັດສັດຕູພືດ ແລະ ພືດເປົ້າໝາຍຕາມທີ່ກຳນົດໄວ້ໃນສະຫຼາກ;

4. ນຳໃຊ້ເຄື່ອງມື ແລະ ຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມຫຼັກການ ການຜະລິດກະສິກຳທີ່ດີ ໂດຍເອົາໃຈໃສ່ປະຕິບັດຕາມຄຳແນະນຳການນຳໃຊ້ ແລະ ໄລຍະເວລາຢຸດໃຊ້ກ່ອນເກັບກ່ຽວພືດ ທີ່ກຳນົດໄວ້ໃນສະຫຼາກ;
5. ນຳໃຊ້ວັດຖຸອຸປະກອນປ້ອງກັນຕົວເອງ ໃຫ້ຖືກຕ້ອງ ແລະ ເໝາະສົມ ເພື່ອຮັບປະກັນຄວາມປອດໄພຕໍ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ;
6. ເກັບຮັກສາຢາປາບສັດຕູພືດ ແລະ ອຸປະກອນນຳໃຊ້ ໄວ້ໃນສະຖານທີ່ສະເພາະ ປ້ອງກັນບໍ່ໃຫ້ບຸກຄົນອື່ນ ສາມາດເຂົ້າເຖິງໄດ້ ແລະ ປະຕິບັດຕາມຂໍ້ກຳນົດໃນມາດຕາ 26 ຂອງດຳລັດສະບັບນີ້;
7. ຜູ່ຜະລິດ ຫຼື ນຳໃຊ້ຢາປາບສັດຕູພືດ ຕ້ອງມີການກວດກາສຸຂະພາບ ປະຈຳປີ.

ສຳລັບຢາປາບສັດຕູພືດ ທີ່ຈະນຳໃຊ້ເຂົ້າໃນກິດຈະການ ການບໍລິການສີດຢາ, ຮົມຢາ ແລະ ການລົງທຶນໃນໂຄງການສະເພາະໃດໜຶ່ງຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງຢາປາບສັດຕູພືດ ດັ່ງນີ້:

1. ນຳໃຊ້ ໃນກິດຈະການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້ ເປັນຕົ້ນການປູກຢາງພາລາ, ອ້ອຍ, ມັນຕົ້ນ, ສາລີ, ເຂົ້າ, ກາເຟ ແລະ ພືດອື່ນ ລວມທັງຂົງເຂດອື່ນ ທີ່ໃຊ້ໃນການຮົມຢາກຳຈັດສັດຕູພືດ, ສີດພົ່ນຂ້າເຊື້ອ ແລະ ການກຳຈັດສັດຕູພືດໃນເລົ້າສາງ;
2. ນຳໃຊ້ໃນອຸດສາຫະກຳປຸງແຕ່ງໄມ້ເປັນຕົ້ນ ການກຳຈັດປອກ, ມອດ ແລະ ອື່ນ;
3. ນຳໃຊ້ໃນສະຖານທີ່ພັກອາໃສ ເປັນຕົ້ນ ການກຳຈັດ ໜູ, ແມງສາບ, ຍຸງ, ເຫັບ, ໄຮ ແລະ ອື່ນ ຊຶ່ງບໍ່ກ່ຽວຂ້ອງກັບຂະບວນການຜະລິດ ອາຫານ ແລະ ຢາ;
4. ນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າທົດລອງ, ໂຄງການໃດໜຶ່ງຂອງລັດຖະບານ.

## ມາດຕາ 28 ການຕິດຕາມ ແລະ ລາຍງານກ່ຽວກັບຢາປາບສັດຕູພືດ

ອົງການຄຸ້ມຄອງຢາປາບສັດຕູພືດ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງແຜນການສຳຫຼວດຄວາມສ່ຽງຢາປາບສັດຕູພືດ ເພື່ອຕິດຕາມເກັບກຳຂໍ້ມູນກ່ຽວກັບຢາປາບສັດຕູພືດຫ້າມນຳໃຊ້, ປະສິດທິພາບໃນການນຳໃຊ້, ຜົນກະທົບ ແລະ ສານຕົກຄ້າງຂອງຢາປາບສັດຕູພືດ. ສຳລັບຂັ້ນຕອນ ວິທີການສ້າງແຜນລະອຽດແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ່ກຳນົດໃນລະບຽບການສະເພາະ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເປັນເຈົ້າການລາຍງານອົງການຄຸ້ມຄອງຢາປາບສັດຕູພືດທີ່ຢູ່ໃກ້ສຸດຊາບ ເມື່ອພົບເຫັນຢາປາບສັດຕູພືດທີ່ຫ້າມນຳໃຊ້, ປະກົດການຜົນກະທົບທີ່ເກີດຂຶ້ນຈາກຢາປາບສັດຕູພືດ, ການນຳໃຊ້ ແລະ ການເຄື່ອນໄຫວກິດຈະການຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ.

## ມາດຕາ 29 ການບຳບັດ ແລະ ກຳຈັດຢາປາບສັດຕູພືດ

ຢາປາບສັດຕູພືດປອມ, ເສຍຄຸນລັກສະນະ, ຜິດມາດຕະຖານ ແລະ ສິ່ງເສດເຫຼືອ ຈາກຢາປາບສັດຕູພືດ ໃນການດຳເນີນທຸລະກິດ, ການຂົນສົ່ງ, ການເກັບຮັກສາ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ ຕ້ອງບຳບັດ ຫຼື ກຳຈັດໂດຍທັນທີ ຕາມມາດຕະຖານເຕັກນິກທີ່ກຳນົດ,ໃນກໍລະນີທີ່ບໍ່ສາມາດບຳບັດ ຫຼື ກຳຈັດສິ່ງ

ເສດເຫຼືອ ຢາປາບສັດຕູພືດນັ້ນໄດ້ ສາມາດເກັບຮັກສາໄວ້ໄດ້ ແຕ່ສູງສຸດບໍ່ໃຫ້ເກີນ 90 ວັນ ນັບແຕ່ມີສິ່ງເສດເຫຼືອເກີດຂຶ້ນ ແລະ ຕ້ອງແຈ້ງສິ່ງເສດເຫຼືອທີ່ອັນຕະລາຍໃຫ້ອົງການຄຸ້ມຄອງຢາປາບສັດຕູພືດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ. ສໍາລັບຄ່າໃຊ້ຈ່າຍໃນການບໍາບັດ ຫຼື ກໍາຈັດຢາປາບສັດຕູພືດ ແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ.

ການບໍາບັດ ແລະ ການກໍາຈັດສິ່ງເສດເຫຼືອຈາກຢາປາບສັດຕູພືດ ຕ້ອງປະຕິບັດຕາມຄູ່ມືແນະນໍາ ແລະ ນໍາໃຊ້ເຕັກໂນໂລຊີ ຂອງອົງການຄຸ້ມຄອງຢາປາບສັດຕູພືດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ປະຕິບັດຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 30 ການພັດທະນາວຽກງານດ້ານຢາປາບສັດຕູພືດ**

ອົງການຄຸ້ມຄອງຢາປາບສັດຕູພືດຕ້ອງພັດທະນາວຽກງານການສຶກສາ ແລະ ຄົ້ນຄວ້າກ່ຽວກັບຢາປາບສັດຕູພືດ ເພື່ອແນໃສ່ຮັບປະກັນປະສິດທິພາບ ແລະ ຫຼຸດຜ່ອນຄວາມສ່ຽງ ຂອງຢາເຄມີປາບສັດຕູພືດ ດ້ວຍການສ້າງຫຼັກສູດວິຊາຊີບ ກ່ຽວກັບຢາປາບສັດຕູພືດ, ພັດທະນາຢາຊີວະພາບປາບສັດຕູພືດ, ເຕັກນິກການນໍາໃຊ້ໃຫ້ເໝາະສົມ ແລະ ປ່ຽນແທນຢາເຄມີປາບສັດຕູພືດ ເທື່ອລະກ້າວ, ເກັບກໍາສະຖິຕິ ແລະ ຂໍ້ມູນຢາປາບສັດຕູພືດ, ກໍ່ສ້າງພື້ນຖານໂຄງລ່າງ ແລະ ສະໜອງງົບປະມານ ໃຫ້ແກ່ການສຶກສາ ແລະ ຄົ້ນຄວ້າຢາປາບສັດຕູພືດ.

**ມາດຕາ 31 ການສົ່ງເສີມຢາຊີວະພາບປາບສັດຕູພືດ**

ລັດສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃນການລົງທຶນ ເພື່ອປະກອບສ່ວນເຂົ້າໃນການດໍາເນີນທຸລະກິດກ່ຽວກັບຢາຊີວະພາບປາບສັດຕູພືດ ດ້ວຍການໃຫ້ຄໍາແນະນໍາທາງດ້ານວິຊາການ, ການສົ່ງພະນັກງານວິຊາການລົງໄປນໍາພາເຮັດຕົວຈິງກັບທີ່, ການສະໜອງຂໍ້ມູນຂ່າວສານ ແລະ ການຖ່າຍທອດເຕັກໂນໂລຊີ ທີ່ກ້າວໜ້າ, ທັນສະໄໝ ທາງດ້ານການຜະລິດ ແລະ ນໍາໃຊ້ ຢາຊີວະພາບປາບສັດຕູພືດ ດ້ວຍຮູບການຝຶກອົບຮົມ, ຈັດກອງປະຊຸມສໍາມະນາ, ທັດສະນະສຶກສາ ແລະ ອື່ນ.

## ໝວດທີ 4

## ການດໍາເນີນທຸລະກິດຢາປາບສັດຕູພືດ

**ມາດຕາ 32 ການດໍາເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງດໍາເນີນທຸລະກິດກ່ຽວກັບຢາປາບສັດຕູພືດ ໃຫ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດ

ໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ຂໍອະນຸຍາດທາງວິຊາການ ໃນການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ ນຳອົງການຄຸ້ມຄອງຢາປາບສັດຕູພືດ.

## ມາດຕາ 33 ເງື່ອນໄຂການດຳເນີນທຸລະກິດຢາປາບສັດຕູພືດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໃນການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ ທາງດ້ານວິຊາການປູກຝັງ, ເຄມີ, ການປ້ອງກັນພືດ ຫຼື ຂະແໜງການທີ່ກ່ຽວຂ້ອງ;
2. ມີມາດຕະການປ້ອງກັນ ແລະ ຮັກສາຄວາມປອດໄພທີ່ເກີດຈາກຢາປາບສັດຕູພືດ;
3. ມີລະບົບໃນການກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ, ຢາປາບສັດຕູພືດໝົດອາຍຸ;
4. ມີສຳນັກງານຕັ້ງຢູ່ ສປປ ລາວ;
5. ມີສະຖານທີ່, ສິ່ງອຳນວຍຄວາມສະດວກ, ສາງເກັບມ້ຽນ ແລະ ພາຫະນະ;
6. ຮັບປະກັນທາງດ້ານເຕັກນິກ, ວັດຖຸປະກອບໃຫ້ພຽງພໍ ແລະ ມີແຜນການດຳເນີນທຸລະກິດຢາປາບສັດຕູພືດ;
7. ງົບປະມານໃນການບໍລິຫານ ແລະ ການດຳເນີນງານ.

ຂັ້ນຕອນການສະເໜີ ແລະ ອອກອະນຸຍາດດຳເນີນທຸລະກິດ ຢາປາບສັດຕູພືດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

## ມາດຕາ 34 ປະເພດທຸລະກິດ ຢາປາບສັດຕູພືດ

ທຸລະກິດ ຢາປາບສັດຕູພືດມີ ດັ່ງນີ້:

1. ທີ່ປຶກສາດ້ານຢາປາບສັດຕູພືດ;
2. ການຜະລິດຢາປາບສັດຕູພືດ;
3. ການນຳເຂົ້າ ແລະ ຈຳໜ່າຍ ຢາປາບສັດຕູພືດ;
4. ການບໍລິການດ້ານ ຢາປາບສັດຕູພືດ;
5. ການບຳບັດ ແລະ ກຳຈັດ ຢາປາບສັດຕູພືດ;
6. ການວິໄຈ ແລະ ທົດສອບຢາປາບສັດຕູພືດ;
7. ທຸລະກິດອື່ນທີ່ກ່ຽວຂ້ອງ ກັບຢາປາບສັດຕູພືດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

## ມາດຕາ 35 ທີ່ປຶກສາດ້ານຢາປາບສັດຕູພືດ

ການດຳເນີນທຸລະກິດທີ່ປຶກສາດ້ານຢາປາບສັດຕູພືດ ແມ່ນການບໍລິການໃຫ້ຄຳແນະນຳກ່ຽວກັບຢາປາບສັດຕູພືດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະດຳເນີນກິດຈະການ ດ້ານທີ່ປຶກສາດ້ານການປ້ອງກັນ ແລະ ກຳຈັດສັດຕູພືດ ຕ້ອງຮຽນຈົບວິຊາສະເພາະດ້ານເຄມີ, ປູກຝັງ ຫຼື ປ້ອງກັນພືດ, ໃບຢັ້ງຢືນການຝຶກອົບຮົມ ແລະ ມີປະສົບການເຮັດວຽກຕົວຈິງ ກ່ຽວກັບຢາປາບສັດຕູພືດ ຢ່າງໜ້ອຍ 05 ປີ ຕາມມາດຖານ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດໄວ້.

**ມາດຕາ 36 ການຜະລິດຢາປາບສັດຕູພືດ**

ການຜະລິດຢາປາບສັດຕູພືດ ແມ່ນທຸລະກິດກ່ຽວກັບການປະສົມສ່ວນປະກອບຕ່າງໆ ຫຼື ວັດຖຸດິບໃຫ້ເປັນຜະລິດຕະພັນຢາປາບສັດຕູພືດໃດໜຶ່ງ ລວມທັງການປ່ຽນຖ່າຍຢາປາບສັດຕູພືດ ຈາກພາຊະນະເດີມໄປໃສ່ພາຊະນະໃໝ່ ຫຼື ມີການຫຸ້ມຫໍ່ ແລະ ຕິດສະຫຼາກ ຢາປາບສັດຕູພືດ ຕາມທີ່ໄດ້ຂຶ້ນທະບຽນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບການຜະລິດຢາປາບສັດຕູພືດ ຕ້ອງປະຕິບັດຕາມມາດຕະຖານກ່ຽວກັບສະຖານທີ່ຕັ້ງ, ບຸກຄະລາກອນ, ເຄື່ອງມືອຸປະກອນທີ່ເໝາະສົມ, ໂຄງລ່າງພື້ນຖານ, ສາງເກັບມ້ຽນ, ພາຫະນະຂົນສົ່ງ, ລະບົບການຄຸ້ມຄອງຮັກສາຄຸນນະພາບ, ລະບົບຮັກສາຄວາມປອດໄພ ແລະ ການກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ ຂອງກິດຈະການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດໄວ້.

**ມາດຕາ 37 ການນຳເຂົ້າ ແລະ ຈຳໜ່າຍ ຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ ແລະ ອຸປະກອນການນຳໃຊ້ ຕ້ອງມີຄວາມຮູ້ພື້ນຖານກ່ຽວກັບຢາປາບສັດຕູພືດ, ສະຖານທີ່ສະເພາະ, ພາຫະນະຂົນສົ່ງ, ອຸປະກອນຮັບໃຊ້, ສາງເກັບມ້ຽນ ແລະ ລະບົບຮັກສາຄວາມປອດໄພ_ຕາມມາດຕະຖານເຕັກນິກ ທີ່ອີງການຄຸ້ມຄອງຢາປາບສັດຕູພືດ ໄດ້ກຳນົດໄວ້.

**ມາດຕາ 38 ການບໍລິການດ້ານຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີຈຸດປະສົງດຳເນີນການບໍລິການດ້ານຢາປາບສັດຕູພືດ ເຂົ້າໃນການຮົມ, ສີດພົ່ນ ຫຼື ນຳໃຊ້ດ້ວຍວິທີການອື່ນ ເພື່ອກຳຈັດສັດຕູພືດ ໃນພື້ນທີ່ການຜະລິດກະສິກຳ ແລະ ສະຖານທີ່ອື່ນ ຕ້ອງມີບຸກຄະລາກອນ ທີ່ຜ່ານການຝຶກອົບຮົມ ແລະ ມີປະສົບການເຮັດວຽກຕົວຈິງຢ່າງໜ້ອຍ 03 ປີ, ມີເຄື່ອງມືອຸປະກອນທີ່ພຽງພໍ, ຮັບປະກັນປະສິດທິພາບ ແລະ ຄວາມປອດໄພ ໃນການນຳໃຊ້ຢາປາບສັດຕູພືດ ແລະ ມີຄຳແນະນຳ ເພື່ອຮັກສາອຸປະກອນ, ມີລະບົບການປ້ອງກັນ ແລະ ສະຫວັດດີການສຳລັບຜູ້ເຮັດວຽກກັບຢາປາບສັດຕູພືດ, ມີລະບົບການບັນທຶກ ຢາປາບສັດຕູພືດທີ່ຖືກນຳໃຊ້ ແລະ ປະຕິບັດຕາມເງື່ອນໄຂອື່ນ ຂອງກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 39 ການບຳບັດ ແລະ ກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການບຳບັດ, ກຳຈັດຢາປາບສັດຕູພືດປອມ, ເສຍຄຸນລັກສະນະ, ຜິດມາດຕະຖານ ແລະ ສິ່ງເສດເຫຼືອ ຈາກຢາປາບສັດຕູພືດ ຕ້ອງປະຕິບັດຕາມມາດຕະຖານເຕັກນິກກ່ຽວກັບ ສະຖານທີ່ຕັ້ງ, ບຸກຄະລາກອນ, ອຸປະກອນເຄື່ອງມື, ໂຄງລ່າງພື້ນຖານ ແລະ ລະບົບຮັກສາຄວາມປອດໄພຕາມເງື່ອນໄຂ ຂອງກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດໄວ້.

**ມາດຕາ 40 ການວິໄຈ ແລະ ທົດສອບຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການວິໄຈ ແລະ ທົດສອບຢາປາບສັດຕູພືດ ຕ້ອງປະຕິບັດຕາມກໍລະນີ ດັ່ງນີ້:

1. ການວິໄຈຢາປາບສັດຕູພືດ ແມ່ນການທົດສອບຄຸນນະພາບ ແລະ ສານພິດຕົກຄ້າງຂອງຢາປາບສັດຕູ ພືດໃນຫ້ອງວິໄຈ ຕ້ອງມີນັກວິໄຈ, ໂຄງລ່າງພື້ນຖານ, ເຄື່ອງມືວິໄຈ ແລະ ລະບົບການຄຸ້ມຄອງ ຄຸນ ນະພາບ ຂອງການວິໄຈ ແລະ ກຳຈັດສິ່ງເສດເຫຼືອ ຂອງຢາປາບສັດຕູພືດ;
2. ການທົດສອບຢາປາບສັດຕູພືດ ແມ່ນການທົດສອບປະສິດທິພາບ ແລະ ຄວາມປອດໄພ ຂອງຢາປາບ ສັດຕູພືດ ໃນພາກສະໜາມ ຕ້ອງມີແຜນການທົດສອບ, ສະຖານທີ່ທົດສອບ, ເຄື່ອງມືອຸປະກອນ, ນັກວິຊາການ ແລະ ລະບົບຮັກສາຄວາມປອດໄພ.

ສຳລັບມາດຕະຖານ ແລະ ເງື່ອນໄຂລະອຽດ ໃນການອະນຸຍາດດຳເນີນທຸລະກິດ ກ່ຽວກັບການວິໄຈ ແລະ ທົດສອບຢາປາບສັດຕູພືດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ໄວ້ໃນລະບຽບການສະເພາະ.

**ມາດຕາ 41 ການໂຈະ ແລະ ການຖອນທະບຽນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ**

ການດຳເນີນທຸລະກິດດ້ານຢາປາບສັດຕູພືດ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ບໍ່ປະຕິບັດໄດ້ຕາມເງື່ອນໄຂການດຳເນີນທຸລະກິດທີ່ກຳນົດໄວ້ໃນມາດຕາ 33 ຂອງດຳລັດສະບັບນີ້;
2. ຈຳໜ່າຍຢາປາບສັດຕູພືດ ປົນເປກັບເຄື່ອງອຸປະໂພກ ແລະ ບໍລິໂພກ;
3. ໂຄສະນາບິດເບືອນເກີນຄວາມເປັນຈິງ ແລະ ມີເນື້ອໃນ ຂັດກັບມາດຕາ 20 ຂອງດຳລັດສະບັບນີ້;
4. ຈຳໜ່າຍຢາປາບສັດຕູພືດປອມ, ເສຍຄຸນລັກສະນະ, ຜິດມາດຕະຖານ, ບໍ່ຕິດສະຫຼາກເປັນພາສາລາວ ແລະ/ຫຼື ພາສາອັງກິດ ແລະ ບໍ່ມີສະຫຼາກ;
5. ມອບໃບອະນຸຍາດດຳເນີນທຸລະກິດ ແລະ ເອກະສານຕ່າງໆກ່ຽວກັບຢາປາບສັດຕູພືດ ໃຫ້ຜູ້ອື່ນ ນຳໃຊ້ ໂດຍບໍ່ສອດຄ່ອງກັບດຳລັດສະບັບນີ້.

ອົງການຄຸ້ມຄອງຢາປາບສັດຕູພືດ ມີສິດໂຈະການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ ຖ້າເຫັນ ວ່າຜູ້ປະກອບການ ດັ່ງກ່າວມີການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ຫຼື ມີພຶດຕິ ກຳອື່ນ ທີ່ສ້າງຜົນເສຍຫາຍ ຕໍ່ເສດຖະກິດ - ສັງຄົມ ແລະ ສິ່ງແວດລ້ອມ.

ໃນກໍລະນີມີການລະເມີດທີ່ຮ້າຍແຮງ ຫຼື ບໍ່ປະຕິບັດຕາມການແນະນຳ, ອົງການຄຸ້ມຄອງຢາປາບສັດຕູພືດ ມີສິດຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາຍົກເລີກທຸລະກິດດັ່ງກ່າວ.

**ມາດຕາ 42 ພັນທະຂອງຜູ່ ດຳເນີນທຸລະກິດ ຢາປາບສັດຕູພືດ**

ຜູ່ປະກອບການດ້ານຢາປາບສັດຕູພືດມີພັນທະ ດັ່ງນີ້:

1. ຮັບປະກັນຄວາມປອດໄພ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ. ໃນກໍລະນີເກີດຄວາມເສຍຫາຍຈາກການດຳເນີນທຸລະກິດຂອງຕົນກ່ຽວກັບຢາປາບສັດຕູພືດ, ຜູ່ດຳເນີນທຸລະກິດຕ້ອງຮັບຜິດຊອບຕາມກົດໝາຍ ແລະ ລະບຽບການ;
2. ເກັບມ້ຽນເອກະສານ ຂຶ້ນທະບຽນຢາປາບສັດຕູພືດ, ໃບອະນຸຍາດດຳເນີນທຸລະກິດ, ໃບສັນຍາຊື້ຂາຍ, ໃບບິນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ;
3. ສະໜອງບັນດາເອກະສານ, ບົດບັນທຶກ, ໃຫ້ຂໍ້ມູນຄວາມເປັນຈິງ, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ພະນັກງານວິຊາການ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
4. ປະກອບສ່ວນທາງດ້ານທຶນຮອນ ຫຼື ແຮງງານເຂົ້າໃນການພັດທະນາວຽກງານ ຢາປາບສັດຕູພືດ;
5. ລາຍງານການເຄື່ອນໄຫວ ກ່ຽວກັບທຸລະກິດຢາປາບສັດຕູພືດຂອງຕົນ ໃຫ້ອົງການຄຸ້ມຄອງຢາປາບສັດຕູພືດ ແລະ ອົງການປົກຄອງທ້ອງຖິ່ນຢ່າງເປັນປົກກະຕິ.

## ໝວດທີ 5

## ການຄຸ້ມຄອງ ຢາປາບສັດຕູພືດ

**ມາດຕາ 43 ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ**

ຄະນະກຳມະການຄຸ້ມຄອງ ຢາປາບສັດຕູພືດ ແມ່ນການຈັດຕັ້ງ ທີ່ບໍ່ປະຈຳການ ປະກອບດ້ວຍກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງສາທາລະນະສຸກ, ກະຊວງການເງິນ, ອົງການໄອຍະການ ແລະ ອົງການປົກຄອງທ້ອງຖິ່ນ ຊຶ່ງ ມີພະລະບົດບາດໃນການຄົ້ນຄວ້າຂຶ້ນທະບຽນ ຫຼື ຖອນຢາປາບສັດຕູພືດ ອອກຈາກບັນຊີທີ່ອະນຸຍາດນຳໃຊ້, ການກຳຈັດສິ່ງເສດເຫຼືອກ່ຽວກັບ ຢາປາບສັດຕູພືດ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງກ່ຽວກັບຢາປາບສັດຕູພືດ.

**ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດ ປະກອບດ້ວຍ:**

1. ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດຂັ້ນສູນກາງ;
2. ຄະນະກຳມະການຄຸ້ມຄອງ ຢາປາບສັດຕູພືດ ແຂວງ, ນະຄອນຫຼວງ;

3. ຄະນະກຳມະການຄຸ້ມຄອງ ຢາປາບສັດຕູພືດ ຂັ້ນເມືອງ, ເທດສະບານ.

ຄະນະກຳມະການຄຸ້ມຄອງ ຢາປາບສັດຕູພືດ ຖືກແຕ່ງຕັ້ງໂດຍ ລັດຖະມົນຕີ ຫຼື ເຈົ້າແຂວງ, ເຈົ້າເມືອງ ຕາມຂັ້ນຄຸ້ມຄອງໂດຍການສະເໜີ ແລະ ເປັນເສນາທິການ ຂອງ ອົງການຄຸ້ມຄອງຢາປາບສັດຕູພືດ ຂອງຂັ້ນນັ້ນ.

## ມາດຕາ 44 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຢາປາບສັດຕູພືດແຕ່ລະຂັ້ນ

ຄະນະກຳມະການຄຸ້ມຄອງຢາປາບສັດຕູພືດມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ລະດົມທຶດຮອນ, ການຊ່ວຍເຫຼືອ ແລະ ສະໜັບສະໜູນ ຈາກອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ຢາປາບສັດຕູພືດໃຫ້ມີປະສິດທິຜົນ;
2. ໃຫ້ຄຳປຶກສາທາງດ້ານວິຊາການ ຕໍ່ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງຄວາມປອດໄພຂອງຢາປາບສັດຕູພືດ ແລະ ການກຳຈັດສິ່ງເສດເຫຼືອກ່ຽວກັບ ຢາປາບສັດຕູພືດ;
3. ຄົ້ນຄວ້າຂຶ້ນທະບຽນ, ໂຈະ ຫຼື ຖອນຢາປາບສັດຕູພືດ ອອກຈາກບັນຊີທີ່ອະນຸຍາດນຳໃຊ້(ສະເພາະຄະນະກຳມະການຄຸ້ມຄອງຢາປາບສັດຕູພືດຂັ້ນສູນກາງ);
4. ພົວພັນ, ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມປອດໄພຂອງຢາປາບສັດຕູພືດ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງກ່ຽວກັບຢາປາບສັດຕູພືດ;
5. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

## ມາດຕາ 45 ອົງການ ຄຸ້ມຄອງ ຢາປາບສັດຕູພືດ

ລັດຖະບານ ຄຸ້ມຄອງວຽກງານ ຢາປາບສັດຕູພືດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບ ກະຊວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງສາທາລະນະສຸກ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການເງິນ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
4. ໜ່ວຍງານກະສິກຳ ແລະ ປ່າໄມ້ ບ້ານ.

**ມາດຕາ 46 ສິດ ແລະ ໜ້າທີ່ຂອງ ກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ຕົ້ນຕໍຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານຢາປາບສັດຕູພືດເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານຢາປາບສັດຕູ ພືດ ໃຫ້ກາຍເປັນ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການລະອຽດ;
3. ນຳສະເໜີຮ່າງດຳລັດ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບຢາປາບສັດຕູພືດ;
4. ສ້າງມາດຕະຖານ ແລະ ຄູ່ມື ຮັບໃຊ້ໃຫ້ແກ່ການຄຸ້ມຄອງ ແລະ ກວດກາການເຄື່ອນໄຫວກິດຈະການ ແລະ ການດຳເນີນທຸລະກິດຢາປາບສັດຕູພືດ;
5. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ແລະ ໂຄງການກ່ຽວກັບວຽກງານຢາປາບສັດຕູພືດ ຢ່າງກວ້າງຂວາງ, ທົ່ວເຖິງ;
6. ຊີ້ນຳ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ຂະແໜງການສາຍຕັ້ງ ໃນຂອບເຂດທົ່ວປະເທດ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ;
8. ຂຶ້ນທະບຽນຢາປາບສັດຕູພືດ, ສ້າງ ແລະ ທົບທວນຄືນ ບັນຊີຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນຳໃຊ້ ແລະ ບັນຊີຢາປາບສັດຕູພືດ ທີ່ຫ້າມນຳໃຊ້ ຢ່າງເປັນປົກກະຕິ, ສ້າງແຜນການສຳຫຼວດຄວາມສ່ຽງຢາ ປາບສັດຕູພືດ;
9. ຄຸ້ມຄອງ, ອອກ ແລະ ຖອນໃບອະນຸຍາດນຳເຂົ້າ, ສົ່ງອອກ, ຂົນສົ່ງ ຢາປາບສັດຕູພືດ, ໃບອະນຸຍາດ ທົດສອບ ແລະ ວິໄຈຢາປາບສັດຕູພືດ ແລະ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ເອກະສານອື່ນ ຕາມຂອບເຂດສິດຮັບຜິດຊອບ;
10. ສ້າງ, ຍົກລະດັບ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນ ທີ່ຮັບຜິດຊອບວຽກງານຄຸ້ມຄອງຢາປາບ ສັດຕູພືດ ແລະ ເຈົ້າໜ້າທີ່ກວດກາຢາປາບ ສັດຕູພືດ ໃນຂອບເຂດທົ່ວປະເທດ ໂດຍມີການປະສານ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;
11. ຄຸ້ມຄອງ ແລະ ມອບໝາຍໃຫ້ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ກວດກາຢາປາບສັດຕູພືດ;
12. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຫຼື ລາຍງານກ່ຽວກັບວຽກງານຢາປາບສັດຕູພືດ;
13. ນຳໃຊ້ມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ຕາມຄວາມ ຮັບຜິດຊອບຂອງຕົນ ລວມທັງການຍຶດຂອງກາງ, ສະເໜີໃຫ້ກັກຕົວຜູ້ກະທຳຜິດ ແລະ ປະກອບ ເອກະສານ ຍື່ນຕໍ່ເຈົ້າໜ້າທີ່ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂ, ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;
14. ພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຢາປາບສັດຕູພືດ;
15. ປຸກລະດົມຂົນຂວາຍ, ຍາດແຍ່ງ, ຄຸ້ມຄອງ, ນຳໃຊ້ ທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເພື່ອ ພັດທະນາວຽກງານຢາປາບສັດຕູພືດ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
17. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 47 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍຂະແໜງປູກຝັງ ເປັນເສນາທິການໃນການຈັດຕັ້ງປະຕິບັດ ມີສິດ ແລະ ໜ້າທີ່ຕົ້ນຕໍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນ ຂ່າວສານກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
3. ຄົ້ນຄວ້າ ແລະ ນໍາສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ອອກຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບວຽກງານຢາປາບສັດຕູພືດ;
4. ຊີ້ນໍາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
5. ອອກໃບອະນຸຍາດ ນໍາເຂົ້າ, ຂົນສົ່ງ,ຈໍາໜ່າຍ ແລະ ນໍາໃຊ້ ຢາປາບສັດຕູພືດ ສະເພາະທີ່ໄດ້ຂຶ້ນທະບຽນໃນ ສປປ ລາວ, ໃບອະນຸຍາດດໍາເນີນທຸລະກິດຢາປາບສັດຕູພືດ ແລະ ເອກະສານອື່ນ ຕາມການມອບ ໝາຍ ຂອງກະຊວງກະສິກໍາ ແລະ ປ່າໄມ້;
6. ບໍາລຸງ, ຍົກລະດັບ, ຍົກຍ້າຍ, ຄຸ້ມຄອງ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ມອບໝາຍເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ ຫຼື ພາກສ່ວນກ່ຽວຂ້ອງ ໃຫ້ດໍາເນີນການກວດກາກິດຈະການ ແລະ ທຸລະກິດຢາປາບສັດຕູພືດ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີກ່ຽວກັບວຽກງານຢາປາບສັດຕູພືດ;
8. ນໍາໃຊ້ມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ຕາມຄວາມຮັບຜິດຊອບຂອງຕົນ ລວມທັງ ການຢຶດຂອງກາງ, ສະເໜີໃຫ້ກັກຕົວຜູ່ກະທໍາຜິດ ແລະ ປະກອບເອກະສານຍື່ນຕໍ່ພາກສ່ວນ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອແກ້ໄຂ ຫຼື ດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;
9. ປຸກລະດົມຂົນຂວາຍ, ຍາດແຍ່ງ, ຄຸ້ມຄອງ, ນໍາໃຊ້ທຶນຮອນ ທັງພາຍໃນ ແລະ ຕ່າງປະເທດເພື່ອພັດທະນາ ວຽກງານຢາປາບສັດຕູພືດ;
10. ປະສານສົມທົບກັບພະແນກການ, ຫ້ອງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ຢາປາບສັດຕູພືດ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ ໂດຍໜ່ວຍງານປູກຝັງ ເປັນເສນາທິການໃນການຈັດຕັ້ງປະຕິບັດ ມີສິດ ແລະ ໜ້າທີ່ ຕົ້ນຕໍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ພິຈາລະນາ ອອກຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານ ຢາປາບສັດຕູພືດ;
4. ບຳລຸງ, ຍົກລະດັບ, ຍົກຍ້າຍ, ຄຸ້ມຄອງ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ມອບໝາຍເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ ຫຼື ພາກສ່ວນກ່ຽວຂ້ອງ ໃຫ້ດຳເນີນການກວດກາ ກິດຈະການ ແລະ ທຸລະກິດຢາປາບສັດຕູພືດ;
5. ສະໜອງການຝຶກອົບຮົມໃຫ້ແກ່ຜູ້ຄ້າຂາຍ ເພື່ອໃຫ້ມີຄວາມຮູ້ພື້ນຖານກ່ຽວກັບຢາປາບສັດຕູພືດ ແລະ ຄວາມອັນຕະລາຍຂອງມັນ;
6. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ;
7. ນຳໃຊ້ມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ຕາມຄວາມຮັບຜິດຊອບຂອງຕົນ ລວມທັງ ການຍຶດຂອງກາງ, ສະເໜີໃຫ້ກັກຕົວຜູ້ກະທຳຜິດ ແລະ ປະກອບເອກະສານ ຍື່ນຕໍ່ພາກສ່ວນ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອແກ້ໄຂ ຫຼື ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;
8. ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຊາບ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ**

ໃນການຄຸ້ມຄອງ ວຽກງານຢາປາບສັດຕູພືດ ໜ່ວຍງານກະສິກຳ ແລະ ປ່າໄມ້ ບ້ານ ມີສິດ ແລະ ໜ້າທີ່ ຕົ້ນຕໍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນ ຂ່າວສານກ່ຽວກັບຢາປາບສັດຕູພືດ ເຕັກນິກການນຳໃຊ້ ໃຫ້ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
2. ເຂົ້າຮ່ວມຕິດຕາມ ແລະ ກວດກາ ການນຳໃຊ້ຢາປາບສັດຕູພືດ, ສິ່ງເສດເຫຼືອຢາປາບສັດຕູພືດ ແລະ ຜົນກະທົບທີ່ເກີດຂຶ້ນ;
3. ຕ້ານ ແລະ ສະກັດກັ້ນ, ແຈ້ງຂໍ້ມູນ ອຸປະຕິເຫດ, ການລັກລອບນຳເຂົ້າ, ການຈຳໜ່າຍ, ການຂົນສົ່ງ ແລະ ນຳໃຊ້ ຢາປາບສັດຕູພືດ ທີ່ຫ້າມນຳໃຊ້ເປັນແຕ່ລະໄລຍະ;
4. ເຂົ້າຮ່ວມໃນການໄກ່ເກ່ຍບັນຫາກ່ຽວກັບຢາປາບສັດຕູພືດ ພາຍໃນບ້ານ;
5. ເຂົ້າຮ່ວມກອງປະຊຸມ ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບຄວາມຮູ້ ທາງດ້ານຢາປາບສັດຕູພືດ ເປັນແຕ່ລະໄລຍະ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ກ່ຽວກັບຢາປາບສັດຕູພືດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ການກວດກາ

### ມາດຕາ 50 ການກວດກາຢາປາບສັດຕູພືດ

ການກວດກາຢາປາບສັດຕູພືດ ແມ່ນການເຄື່ອນໄຫວ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຫຼື ພາກສ່ວນກ່ຽວຂ້ອງ ຕາມຮູບການກວດກາຢາປາບສັດຕູພືດ ທີ່ກຳນົດໄວ້ໃນມາດຕາ 52 ຂອງດຳລັດສະບັບນີ້ ຊຶ່ງໄດ້ຮັບການມອບໝາຍ ຈາກອົງການຄຸ້ມຄອງຢາປາບສັດຕູພືດ ເພື່ອກວດກາການເຄື່ອນໄຫວ ກິດຈະການ ກ່ຽວກັບຢາປາບສັດຕູພືດ ເປັນຕົ້ນ ການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ໂຄສະນາ, ເກັບຮັກສາ, ນຳໃຊ້, ສິ່ງເສດເຫຼືອ, ການກຳຈັດຢາປາບສັດຕູພືດ ແລະ ທຸລະກິດຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບການປະຕິບັດພັນທະ ການຮ່ວມມືລະຫວ່າງປະເທດ ແລະ ລະບຽບການສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 51 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ

ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດມີ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນຳກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຢາປາບສັດຕູພືດ;
2. ກວດກາສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບມ້ຽນ, ການໂຄສະນາ, ການຂົນສົ່ງ ແລະ ສະຖານທີ່ນຳໃຊ້ຢາປາບສັດຕູພືດ ຫຼື ເຂົ້າໄປໃນສະຖານທີ່ໃດໜຶ່ງທີ່ສົງໃສ ວ່າມີການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວກັບຢາປາບສັດຕູພືດ ເພື່ອເກັບກຳຂໍ້ມູນ;
3. ເກັບຕົວຢ່າງຢາປາບສັດຕູພືດ ເພື່ອນຳໄປວິໄຈຄຸນນະພາບ ຫຼື ນຳໃຊ້ເປັນຫຼັກຖານ;
4. ນຳໃຊ້ເຄື່ອງມື, ອຸປະກອນ ແລະ ພາຫະນະຕ່າງໆ ໃນການເຄື່ອນໄຫວວຽກຢາປາບສັດຕູພືດຕາມ ລະບຽບສະເພາະ;
5. ປະສານສົມທົບກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ສັ່ງ ຫຼື ນຳໃຊ້ມາດຕະການອັນເໝາະສົມ ເພື່ອໃຫ້ຜູ້ຂັບຂີ່ ພາຫະນະຂົນສົ່ງ ຢຸດ ຫຼື ໃຫ້ເປີດພາຊະນະຫຸ້ມຫໍ່ໃດໜຶ່ງ ເມື່ອມີແຫຼ່ງຂ່າວທີ່ໜ້າເຊື່ອຖືໃນການ ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ເພື່ອດຳເນີນການກວດຄົ້ນ;
6. ກວດກາ, ກັກຂອງກາງ ແລະ ປັບໃໝຜູ້ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບການ ທີ່ ກ່ຽວຂ້ອງ;
7. ສຶກສາອົບຮົມຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຢາປາບສັດຕູພືດ;

8. ນຳໃຊ້ມາດຕະການ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ຕາມຄວາມຮັບຜິດຊອບຂອງຕົນ ພ້ອມທັງສະເໜີ ຍຶດຂອງກາງ, ປັບໃໝ, ກັກຕົວຜູ້ກະທຳຜິດ ແລະ ປະກອບເອກະສານ ສົ່ງໃຫ້ເຈົ້າໜ້າ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂ ຫຼື ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ;
9. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວຂອງຕົນ ໃຫ້ແກ່ອົງການຄຸ້ມຄອງ ຢາປາບສັດຕູພືດ ທີ່ຕົນຂຶ້ນກັບ ຢ່າງເປັນປົກກະຕິ;
10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດວຽກງານກວດກາຢາປາບສັດຕູພືດ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ອົງການຄຸ້ມຄອງຢາປາບສັດຕູພືດ.

**ມາດຕາ 52 ການດຳເນີນການກວດກາຢາປາບສັດຕູພືດ**

ການກວດກາຢາປາບສັດຕູພືດ ປະກອບດ້ວຍຮູບການ ດັ່ງນີ້:

1. **ການກວດກາຕາມລະບົບປົກກະຕິ**: ແມ່ນການກວດກາການປະຕິບັດກົດໝາຍລະບຽບການກ່ຽວກັບຢາປາບສັດຕູພືດ ໃນສະຖານທີ່ຕ່າງໆ ເປັນຕົ້ນ: ຮ້ານຈຳໜ່າຍ, ສາງເກັບມ້ຽນ, ສະຖານທີ່ນຳໃຊ້ ແລະ ສະຖານທີ່ອື່ນ ຊຶ່ງດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ ທີ່ໄດ້ຮັບຮອງ ຈາກອົງການຄຸ້ມຄອງຢາປາບສັດຕູພືດ ແຕ່ລະຂັ້ນ;
2. **ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ**: ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນຕາມຂໍ້ຕົກລົງຂອງການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ຕາມການສະເໜີຂອງຜູ້ຖືກກວດກາ ຊຶ່ງຕ້ອງແຈ້ງໃຫ້ຊາບກ່ອນລ່ວງໜ້າ;
3. **ການກວດກາແບບກະທັນຫັນ**: ແມ່ນການກວດກາໂດຍຮີບດ່ວນຕາມແຫຼ່ງຂ່າວ ຫຼື ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງທີ່ໜ້າເຊື່ອຖື ຊຶ່ງສາມາດດຳເນີນການກວດກາໄດ້ໃນທຸກສະຖານທີ່ ແລະ ທຸກເວລາ ໂດຍບໍ່ຕ້ອງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ການດຳເນີນການກວດກາຢາປາບສັດຕູພືດ ທຸກຄັ້ງ ຕ້ອງໄດ້ຮັບການມອບໝາຍ ເປັນລາຍລັກອັກສອນຈາກອົງການຄຸ້ມຄອງຢາປາບສັດຕູພືດຂັ້ນນັ້ນ ເວັ້ນເສຍແຕ່ໃນກໍລະນີ ທີ່ຈຳເປັນ ແລະ ຮີບດ່ວນ;

ການມອບໝາຍ ຫຼື ແຕ່ງຕັ້ງ ໃຫ້ດຳເນີນການກວດກາໃນແຕ່ລະຄັ້ງຕ້ອງປະກອບມີ ຜູ້ກວດກາຢ່າງໜ້ອຍ 03 ຄົນຂຶ້ນໄປ ແລະ ຕ້ອງມີເຈົ້າໜ້າທີ່ກວດກາຢາປາບສັດຕູພືດຢ່າງໜ້ອຍ 01 ຄົນ.

ໃນການດຳເນີນການກວດກາຢາປາບສັດຕູພືດ ເຈົ້າໜ້າທີ່ກວດກາຕ້ອງສະແດງໃບຢັ້ງຢືນການມອບໝາຍ ແລະ ບັດເຈົ້າໜ້າທີ່ ຂອງຕົນໃຫ້ຜູ້ທີ່ຖືກກວດກາຊາບ ຫຼັງຈາກນັ້ນຈຶ່ງເລີ່ມ ກວດກາຄວາມຖືກຕ້ອງ ແລະ ສອດຄ່ອງ ຂອງກິດຈະການ ຫຼື ການດຳເນີນທຸລະກິດ. ໃນກໍລະນີພົບເຫັນການກະທຳຜິດ ຕ້ອງເອົາຄຳໃຫ້ການເບື້ອງຕົ້ນ ແລະ ເຮັດບົດບັນທຶກ ກ່ຽວກັບຂໍ້ມູນ, ຫຼັກຖານ ແລະ ຂອງກາງຂອງການກະທຳຜິດ

ລະຫວ່າງເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ ກັບຜູ່ຖືກກວດກາ ພ້ອມທັງ ກັກຂອງກາງໄວ້ໃນສະຖານທີ່ ກໍານົດໃຫ້ ໂດຍອົງການຄຸ້ມຄອງຢາປາບສັດຕູພືດ ມອບໝາຍໃຫ້ກວດກາເທົ່ານັ້ນ.

ພາຍຫຼັງທີ່ສໍາເລັດ ການກວດກາແລ້ວ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຫຼື ຜູ່ທີ່ໄດ້ຮັບມອບໝາຍ ຕ້ອງເຮັດບົດລາຍງານ ຄັດຕິດ ກັບບົດບັນທຶກ ການກວດກາ ໃຫ້ອົງການຄຸ້ມຄອງຢາປາບສັດຕູພືດທີ່ມອບໝາຍ ຫຼື ແຕ່ງຕັ້ງ ພາຍໃນ 03 ວັນ ລັດຖະການ ນັບແຕ່ວັນ ສິ້ນສຸດການກວດກາເປັນຕົ້ນໄປ ເພື່ອພິຈາລະນາ.

ສໍາລັບຂັ້ນຕອນວິທີການກວດກາຢາປາບສັດຕູພືດ ແລະ ການລາຍງານ ແມ່ນ ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 53 ການພິຈາລະນາຜົນການກວດກາ ແລະ ການແກ້ໄຂ**

ອົງການຄຸ້ມຄອງຢາປາສັດຕູພືດ ທີ່ແຕ່ງຕັ້ງໃຫ້ກວດກາ ຕ້ອງພິຈາລະນາ ແລະ ມີຄໍາເຫັນພາຍໃນ 15 ວັນ ລັດຖະການ ນັບແຕ່ວັນ ທີ່ໄດ້ຮັບບົດລາຍງານ ຜົນຂອງການກວດກາຢາປາບສັດຕູພືດ ເປັນຕົ້ນໄປ ແລະ ຕ້ອງແຈ້ງຜົນຂອງການພິຈາລະນາເປັນລາຍລັກອັກສອນ ໃຫ້ຜູ່ຖືກກວດກາຊາບ ພາຍໃນ 03 ວັນ ລັດຖະການ ນັບແຕ່ວັນມີຄໍາເຫັນເປັນຕົ້ນໄປ ຊຶ່ງຄໍາເຫັນດັ່ງກ່າວປະກອບມີ ລັກສະນະ ດັ່ງນີ້:

1. ແກ້ໄຂ ແລະ ຍົກເລີກການກວດກາ;
2. ສືບຕໍ່ການແກ້ໄຂ.

ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ສາມາດແກ້ໄຂ ແລະ ຍົກເລີກການກວດກາຢາປາບສັດຕູພືດ ແມ່ນການລະເມີດດໍາລັດສະບັບນີ້ ກໍານົດໃຫ້ແກ້ໄຂ ດ້ວຍມາດຕະການ ທາງດ້ານບໍລິຫານ.

ກ່ອນທີ່ຈະຍົກເລີກ ການກວດກາ ຜູ່ທີ່ລະເມີດດໍາລັດສະບັບນີ້ ຕ້ອງຈ່າຍຄ່າປັບໃໝ ຫຼື ຄ່າທໍານຽມຕ່າງໆ ຕາມທີ່ກໍານົດໄວ້ໃນດໍາລັດສະບັບນີ້ ແລະ ການຊໍາລະດັ່ງກ່າວ ຕ້ອງປະຕິບັດໃຫ້ຄົບຖ້ວນພາຍໃນເວລາ 10 ວັນ ລັດຖະການ.

ໃນກໍລະນີ ຜູ່ທີ່ລະເມີດດໍາລັດສະບັບນີ້ ຫາກສົມຍອມ ແລະ ໄດ້ເສຍຄ່າປັບໃໝ ແລະ ຄ່າທໍານຽມຕ່າງໆ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ອົງການຄຸ້ມຄອງຢາປາບສັດຕູພືດຕ້ອງແກ້ໄຂ ຫຼື ຍົກເລີກການກວດກາ ພ້ອມທັງສິ່ງຂອງກາງຄືນໃຫ້ເຈົ້າຂອງເດີມ ໂດຍກໍານົດເງື່ອນໄຂ ໃຫ້ມີການຈັດການ ແລະ ປະຕິບັດໃຫ້ສໍາເລັດ ພາຍໃນເວລາທີ່ກໍານົດໄວ້ ຍົກເວັ້ນຢາປາບສັດຕູພືດ ທີ່ຢູ່ໃນບັນຊີ ຫ້າມນໍາໃຊ້ ຫຼື ຈັດຢູ່ໃນອັນຕະລາຍປະເພດ 1, ໝົດອາຍຸນໍາໃຊ້ ຫຼື ຢາປາບສັດຕູພືດປອມ ຕ້ອງຖືກຮິບໄວ້ ເປັນຂອງລັດ ເພື່ອອອກຄໍາສັ່ງໃຫ້ຜູ້ລະເມີດສົ່ງກັບຄືນປະເທດສົ່ງອອກ, ບໍາບັດ ຫຼື ກໍາຈັດ.

ການລະເມີດ ດໍາລັດສະບັບນີ້ ຫາກບໍ່ສາມາດແກ້ໄຂ ຕາມຂັ້ນຕອນທີ່ກໍານົດໄວ້ຂ້າງເທິງນັ້ນ, ອົງການຄຸ້ມຄອງຢາປາບສັດຕູພືດ ຕ້ອງສະເໜີ ຕໍ່ຄະນະກໍາມະການຄຸ້ມຄອງຢາປາບສັດຕູພືດຂັ້ນນັ້ນເພື່ອແກ້ໄຂ.

## ໝວດທີ 7

## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດ

### ມາດຕາ 54 ງົບປະມານ

ອົງການຄຸ້ມຄອງຢາປາບສັດຕູພືດ ມີງົບປະມານສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ງົບປະມານຂອງອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ປະຕິບັດວຽກງານ ກວດກາຢາປາບສັດຕູພືດ ຂັ້ນໃດ ແມ່ນຂຶ້ນກັບງົບປະມານຂອງອົງການຄຸ້ມຄອງວຽກງານກວດກາຢາປາບສັດຕູພືດຂັ້ນນັ້ນ.

### ມາດຕາ 55 ເງິນທີ່ປັບໃໝ ຫຼື ຂາຍຢາປາບສັດຕູພືດທີ່ໄດ້ຮິບມາ

ເງິນທີ່ໄດ້ມາຈາກການປັບໃໝ ຫຼື ຂາຍຢາປາບສັດຕູພືດທີ່ໄດ້ຮິບມາ ແມ່ນໃຫ້ໃຊ້ຈ່າຍເຂົ້າໃນການດຳເນີນການແກ້ໄຂຄະດີ, ຄ່າແຈ້ງຂ່າວ, ຄ່າຝາກສາງ, ຄ່າອຸປະກອນປ້ອງກັນຄວາມປອດໄພ, ຄ່າແບກຫາບ ຍົກຍໍ, ແລະ ເຄື່ອນຍ້າຍຂອງກາງທີ່ຍຶດ ຫຼື ຮິບ, ໃຫ້ບຸກຄົນທົ່ວໄປທີ່ໄດ້ປະກອບສ່ວນເຂົ້າໃນການດຳເນີນການກວດກາຢາປາບສັດຕູພືດ ລວມທັງກວດ ແລະ ປິ່ນປົວສຸຂະພາບ, ການເຄື່ອນໄຫວວຽກງານຢາປາບສັດຕູພືດ ແລະ ຄ່າໃຊ້ຈ່າຍທີ່ຈຳເປັນ, ນອກນັ້ນ ແມ່ນມອບເຂົ້າງົບປະມານ.

ຄ່າໃຊ້ຈ່າຍດັ່ງກ່າວນັ້ນ ແມ່ນບໍ່ໃຫ້ເກີນ ຫົກສິບສ່ວນຮ້ອຍ 60% ຂອງມູນຄ່າທີ່ໄດ້ຈາກການປັບໃໝ ຫຼື ຂາຍຢາປາບສັດຕູພືດທີ່ໄດ້ຮິບມາ.

### ມາດຕາ 56 ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ຢາປາບສັດຕູພືດ

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ມີ ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ສະເພາະ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ແລະ ອະນຸຍາດຕາມລະບຽບການ.

ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຕ້ອງນຸ່ງເຄື່ອງແບບ, ກາໝາຍ ແລະ ຖືບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດທຸກຄັ້ງ.

## ໝວດທີ 8

## ຂໍ້ຫ້າມ

### ມາດຕາ 57 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຜະລິດ, ນໍາເຂົ້າ, ສົ່ງອອກ, ນໍາໃຊ້ ຫຼື ຈໍາໜ່າຍຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ, ຢາປາບສັດຕູພືດປອມ, ຢາປາບສັດຕູພືດເສຍຄຸນລັກສະນະ ແລະ ຢາປາບສັດຕູພືດຜິດມາດຕະຖານ;
3. ຄອບຄອງ ຫຼື ນໍາໃຊ້ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງປະເພດ I ແລະ ຢູ່ໃນບັນຊີຫ້າມນໍາໃຊ້ ໃນ ສປປ ລາວ;
4. ຖິ້ມ, ລ້າງ ຫຼື ຖອກ ສິ່ງເສດເຫຼືອຢາປາບສັດຕູພືດລົງແຫຼ່ງນໍ້າ ແລະ ເຂດຊຸມຊົນ;
5. ບໍາບັດ, ກໍາຈັດຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດ ບໍ່ຖືກຕ້ອງຕາມມາດຕາ 29 ຂອງດໍາລັດສະບັບນີ້;
6. ໂຄສະນາ ຫຼື ໃສ່ຮ້າຍປ້າຍສີ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ສະໜອງຢາປາບສັດຕູພືດ;
7. ນໍາໃຊ້ພາຊະນະບັນຈຸ ຫຼື ສິ່ງຫຸ້ມຫໍ່ຢາປາບສັດຕູພືດ ເພື່ອບັນຈຸອາຫານ, ເຄື່ອງດື່ມ ແລະ ຈຸດປະສົງອື່ນ;
8. ວ່າຈ້າງບຸກຄົນ ໃຫ້ບໍລິການກ່ຽວກັບຢາປາບສັດຕູພືດ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
9. ຂົນສົ່ງຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມຂໍ້ກໍານົດ ໃນມາດຕາ 24 ຂອງດໍາລັດສະບັບນີ້ ເພື່ອນໍາເຂົ້າ ແລະ ຈໍາໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງຢາປາບສັດຕູພືດ;
10. ຮ່ວມມື ໃນການປົກປິດ, ທໍາລາຍຂໍ້ມູນຫຼັກຖານ ແລະ ຊຸກຍູ້ການກະທໍາ ທີ່ພົວພັນກັບ ຂໍ້ຫ້າມໃນມາດຕານີ້;
11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດຕໍ່ດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 58 ຂໍ້ຫ້າມສໍາລັບຜູ້ປະກອບການ**

ນອກຈາກຂໍ້ຫ້າມທີ່ກໍານົດໄວ້ໃນມາດຕາ 57 ແລະ 59 ຂອງດໍາລັດສະບັບນີ້, ຫ້າມຜູ້ປະ ກອບການກ່ຽວກັບຢາປາບສັດຕູພືດມີພຶດຕິກໍາ ດັ່ງນີ້:

1. ດໍາເນີນກິດຈະການ ແລະ ທຸລະກິດຢາປາບສັດຕູພືດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ແລະ ຄອບຄອງຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ;
2. ນໍາເຂົ້າຢາປາບສັດຕູພືດ ທີ່ໃຊ້ແລ້ວ ຫຼື ໝົດອາຍຸ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ;
3. ປ່ຽນແປງການຫຸ້ມຫໍ່ ຫຼື ເນື້ອໃນ ແລະ ອົງປະກອບຕ່າງໆໃນສະຫຼາກຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
4. ໃຫ້ລາງວັນ ຫຼື ຂອງຂວັນອື່ນ ເພື່ອຊຸກຍູ້ໃຫ້ມີການຊື້ ຫຼື ນໍາໃຊ້ສິນຄ້າຢາປາບສັດຕູພືດຂອງຕົນ ນອກຈາກເຄື່ອງປ້ອງກັນຕົວກ່ຽວກັບການນໍາໃຊ້ຢາປາບສັດຕູພືດ;
5. ສົມທຽບປະສິດທິພາບການນໍາໃຊ້ຢາປາບສັດຕູພືດຂອງຕົນ ກັບຜະລິດຕະພັນອື່ນໃນເວລາໂຄສະນາ ຫຼື ຈໍາໜ່າຍຢາປາບສັດຕູພືດ;
6. ແຈກຢາຍຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງຢາປາບສັດຕູພືດ;
7. ຈໍາໜ່າຍຢາປາບສັດຕູພືດ ໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈໍາໜ່າຍອື່ນ ທີ່ບໍ່ມີໃບອະນຸຍາດດໍາເນີນທຸລະກິດຢາປາບສັດຕູພືດ;

8. ເພີ່ມ, ປະສົມ, ຄ່ຽນຖ່າຍ ຫຼື ແບ່ງຢາປາບສັດຕູພືດ ຈາກພາຊະນະບັນຈຸເດີມ ເພື່ອຂາຍ ແລະ ນໍາໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
9. ໃຫ້ສິນບົນ, ໃຫ້ຂໍ້ມູນແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ປອມແປງເອກະສານ ແລະ ຕາປະທັບກ່ຽວກັບວຽກງານຢາປາບສັດຕູພືດ;
10. ມີພຶດຕິກໍາຕາມທີ່ໄດ້ກໍານົດໄວ້ໃນມາດຕາອື່ນ ທີ່ເປັນການລະເມີດດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 59 ຂໍ້ຫ້າມສໍາລັບຜູ່ນໍາໃຊ້**

ນອກຈາກຂໍ້ຫ້າມທີ່ກໍານົດໄວ້ໃນມາດຕາ 57 ຂອງດໍາລັດສະບັບນີ້, ຫ້າມຜູ່ນໍາໃຊ້ຢາປາບສັດຕູພືດ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ຢາປາບສັດຕູພືດທີ່ນອນຢູ່ໃນບັນຊີຫ້າມນໍາໃຊ້;
2. ນໍາໃຊ້ຢາປາບສັດຕູພືດໂດຍບໍ່ຖືກຕ້ອງຕາມຫຼັກວິຊາການ ຊຶ່ງກໍານົດໄວ້ໃນມາດຕາ 27 ຂອງດໍາລັດ ສະບັບນີ້ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
3. ນໍາໃຊ້ຢາເຄມີປາບສັດຕູພືດ ໃນພື້ນທີ່ໃດໜຶ່ງທີ່ບໍ່ເປັນກໍາມະສິດຂອງຕົນ ຫຼື ບໍ່ໄດ້ຮັບການມອບໝາຍ ຈາກເຈົ້າຂອງພື້ນທີ່;
4. ບໍ່ໃຫ້ໃຊ້ແຮງງານເດັກອາຍຸຕໍ່າກວ່າ 15 ປີ, ຜູ່ຍິງທີ່ກໍາລັງຖືພາ ຫຼື ມີລູກນ້ອຍອາຍຸຕໍ່າກວ່າ 01 ປີ ກ່ຽວຂ້ອງກັບການນໍາໃຊ້ຢາປາບສັດຕູພືດ;
5. ຮັບຈ້າງ ບໍລິການຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
6. ນໍາໃຊ້ຢາປາບສັດຕູພືດເກີນອັດຕາ, ໄລຍະເວລາຢຸດນໍາໃຊ້ຢາປາບສັດຕູພືດ ກ່ອນການເກັບກ່ຽວຜົນຜະລິດພືດທີ່ກໍານົດໄວ້ໃນສະຫຼາກ ແລະ ບໍ່ອະນຸຍາດໃຫ້ປະສົມຢາປາບສັດຕູພືດຊະນິດອື່ນ;
7. ມີພຶດຕິກໍາຕາມທີ່ໄດ້ກໍານົດໄວ້ໃນມາດຕາອື່ນ ທີ່ເປັນການລະເມີດດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 60 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ນອກຈາກຂໍ້ຫ້າມທີ່ກໍານົດໄວ້ໃນມາດຕາ 57 ຂອງດໍາລັດສະບັບນີ້, ຫ້າມພະນັກງານ ແລະ ເຈົ້າໜ້າກວດກາຢາປາບສັດຕູພືດມີພຶດຕິກໍາດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ກົດໜ່ວງ-ຖ່ວງດຶງ, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2. ເປີດເຜີຍຄວາມລັບຂອງທາງລັດຖະການ ແລະ ຂອງຜູ່ປະກອບການ;
3. ກົດໜ່ວງ-ຖ່ວງດຶງ ໃນການພິຈາລະນາເອກະສານ ໂດຍບໍ່ມີເຫດຜົນ;
4. ປອມແປງເອກະສານ ຫຼື ອອກເອກະສານທີ່ບໍ່ຖືກຕ້ອງ;
5. ເພີ່ມ ຫຼື ຫຼຸດຄ່າທໍານຽມ, ຄ່າບໍລິການວິຊາການ ຫຼື ນໍາໃຊ້ລາຍຮັບຈາກວຽກງານຢາປາບສັດຕູພືດທີ່ບໍ່ຖືກຕ້ອງຕາມລະບຽບການ;

6. ເມີນເສີຍຕໍ່ລະບຽບການ, ຂັ້ນຕອນປະຕິບັດໃນການກວດກາ ແລະ ແກ້ໄຂວຽກງານກ່ຽວກັບຢາປາບສັດຕູພືດໂດຍບໍ່ຖືກຕ້ອງ;
7. ຂາດຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ ຊຶ່ງພາໃຫ້ເກີດຄວາມເສຍຫາຍ;
8. ມີພຶດຕິກຳຕາມທີ່ໄດ້ກຳນົດໄວ້ໃນມາດຕາອື່ນ ທີ່ເປັນການລະເມີດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 9

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 61 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານ ດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.

### ມາດຕາ 62 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກລະເມີດ ດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປັບໄໝ ຫຼື ລົງໂທດຕາມກົດໝາຍ ແລະ ລະບຽບການ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

### ມາດຕາ 63 ມາດຕະການຕໍ່ການກະທຳຜິດສະຖານເບົາ

ການກະທຳຜິດສະຖານເບົາມີ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຂົນສົ່ງ ແລະ ຜະລິດຢາປາບສັດຕູພືດ ແລະ ດຳເນີນທຸລະກິດຢາປາບສັດຕູພືດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
2. ການນຳເຂົ້າ, ຜະລິດ, ຈຳໜ່າຍ, ນຳໃຊ້ ຫຼື ມີໄວ້ໃນຄອບຄອງຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ;
3. ເພີ່ມ, ປະສົມ, ຄ່ຽນຖ່າຍ, ແບ່ງຢາປາບສັດຕູພືດ ຈາກພາຊະນະບັນຈຸເດີມ, ປ່ຽນແປງການຫຸ້ມຫໍ່ ຫຼື ເນື້ອໃນ ແລະ ອົງປະກອບຕ່າງໆໃນສະຫຼາກຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
4. ຈຳໜ່າຍຢາປາບສັດຕູພືດ ໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈຳໜ່າຍອື່ນ ທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
5. ວ່າຈ້າງບຸກຄົນ ໃຫ້ບໍລິການກ່ຽວກັບຢາປາບສັດຕູພືດ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
6. ຂົນສົ່ງຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມທີ່ກຳນົດໄວ້ ໃນວັກ 1, 2 ມາດຕາ 24 ຂອງດຳລັດສະບັບນີ້;

7. ໃຫ້ສິ່ງອື່ນ ເປັນລາງວັນ ຫຼື ຂອງຂວັນ ເພື່ອຊຸກຍູ້ໃຫ້ມີການຊື້ ຫຼື ນຳໃຊ້ສິນຄ້າ ຢາປາບສັດຕູພືດຂອງ ຕົນ;
8. ສົມທຽບປະສິດທິພາບ ການນຳໃຊ້ຢາປາບສັດຕູພືດ ຂອງຕົນກັບຜະລິດຕະພັນອື່ນ ໃນເວລາໂຄສະນາ ຫຼື ຈຳໜ່າຍຢາປາບສັດຕູພືດ;
9. ນຳໃຊ້ຢາປາບສັດຕູພືດ ໂດຍບໍ່ຖືກຕ້ອງຕາມທີ່ກຳນົດໄວ້ໃນມາດຕາ 27 ຂອງດຳລັດສະບັບນີ້;
10. ນຳໃຊ້ພາຊະນະບັນຈຸ ຫຼື ສິ່ງຫຸ້ມຫໍ່ຢາປາບສັດຕູພືດ ເພື່ອບັນຈຸອາຫານ, ເຄື່ອງດື່ມ ແລະ ຈຸດປະສົງອື່ນ;
11. ນຳໃຊ້ຢາເຄມີປາບສັດຕູພືດ ໃນພື້ນທີ່ບໍ່ເປັນກຳມະສິດຂອງຕົນ ຫຼື ຮັບຈ້າງ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
12. ກົດໜ່ວງ-ຖ່ວງດຶງ ແລະ ສ້າງຄວາມຫຍຸ້ງຍາກໃນການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ລະບຽບການ ກ່ຽວກັບຢາປາບສັດຕູພືດ.

ບຸກຄົນທີ່ໄດ້ກະທຳຜິດ ສະຖານເບົາ ຈະຖືກປະຕິບັດມາດຕະການລົງໂທດ ຕາມມູນຄ່າຂອງຢາປາບສັດຕູພືດ, ເຄື່ອງມືອຸປະກອນ ຫຼື ພຶດຕິກຳທີ່ເປັນການກະທຳຜິດ ພ້ອມທັງຍຶດຂອງກາງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການກະທຳຜິດຄັ້ງທຳອິດທີ່ມີມູນຄ່າ ດັ່ງນີ້:

   - ຕໍ່າກວ່າ 500,000 ກີບ ຈະຖືກ ສຶກສາອົບຮົມ ແລະ ຕັກເຕືອນ;

   - ແຕ່ 500,000 ກີບ ຫາ 10,000,000 ກີບ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ 50% ຂອງມູນຄ່າຂອງກາງທີ່ກະທຳຜິດ;

   - ແຕ່ 10,000,000 ກີບ ຂຶ້ນໄປ ຈະຖືກ ປັບໃໝ ເຈັດສິບສ່ວນຮ້ອຍ 70% ຂອງມູນຄ່າ ຂອງກາງທີ່ກະທຳຜິດ;

2. ການກະທຳຜິດຄັ້ງຜິດຄັ້ງທີສອງທີ່ມີມູນຄ່າ ດັ່ງນີ້:

   - ຕໍ່າກວ່າ 500,000 ກີບ ຈະຖືກປັບໃໝ 500,000 ກີບ

   - ສູງກວ່າ 500,000 ກີບ ຂຶ້ນໄປ ຈະຖືກປັບໃໝ ໜຶ່ງເທົ່າ ຂອງມູນຄ່າ ຂອງກາງທີ່ກະທຳຜິດພ້ອມທັງໂຈະໃບອະນຸຍາດ ດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ.

**ມາດຕາ 64 ມາດຕະການຕໍ່ການກະທຳຜິດສະຖານໜັກ**

ອົງການຄຸ້ມຄອງຢາປາບສັດຕູພືດ ຕ້ອງປັບໃໝຜູ້ກະທຳຜິດ ສອງເທົ່າ ຂອງມູນຄ່າ ຂອງກາງທີ່ກະທຳຜິດ ພ້ອມທັງສະເໜີພາກສ່ວນທີ່ກ່ຽວຂ້ອງ ເພື່ອຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດຖາວອນ ແລະ ປະກອບເອກະສານສົ່ງໃຫ້ເຈົ້າໜ້າທີ່ ເພື່ອດຳເນີນຄະດີ ຕາມກົດໝາຍ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການນຳເຂົ້າ, ຜະລິດ, ຈຳໜ່າຍ, ນຳໃຊ້ ຫຼື ມີໄວ້ໃນຄອບຄອງ ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງປະເພດ I ແລະ ຢູ່ໃນບັນຊີຫ້າມນຳໃຊ້ຂອງ ສປປ ລາວ;

2. ແຈກຢາຍຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;
3. ຂົນສົ່ງຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມທີ່ກໍານົດໄວ້ ໃນວັກ 3 ມາດຕາ 24 ຂອງດໍາລັດສະບັບນີ້;
4. ນໍາເຂົ້າຢາປາບສັດຕູພືດ ທີ່ໃຊ້ແລ້ວ ຫຼື ໝົດອາຍຸ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ;
5. ລ້າງ, ຖອກ ສິ່ງເສດເຫຼືອຢາປາບສັດຕູພືດ ລົງໃນແຫຼ່ງນໍ້າທໍາມະຊາດ, ຮ່ອງລະບາຍນໍ້າ ຫຼື ແຫຼ່ງຊຸມຊົນ ຫຼື ບໍາບັດ, ກໍາຈັດຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດ ບໍ່ຖືກຕ້ອງຕາມມາດຕາ 29 ຂອງດໍາລັດສະບັບນີ້;
6. ນໍາໃຊ້ພາຊະນະບັນຈຸ ຫຼື ສິ່ງຫຸ້ມຫໍ່ຢາປາບສັດຕູພືດ ເພື່ອບັນຈຸອາຫານ, ເຄື່ອງດື່ມ ແລະ ຈຸດປະສົງອື່ນ ຊຶ່ງສ້າງຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສິ່ງແວດລ້ອມ;
7. ການລະເມີດ ເກີນ 2 ຄັ້ງ ຫຼື ເປັນອາຈິນ ຂອງການກະທໍາຜິດສະຖານເບົາ ທີ່ກໍານົດໄວ້ ໃນມາດຕາ 63 ຂອງດໍາລັດສະບັບນີ້ ຫຼື ບໍ່ຍອມຊໍາລະຄ່າປັບໄໝ, ຄ່າໃຊ້ຈ່າຍ ທີ່ກໍານົດໄວ້;
8. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
9. ປອມແປງເອກະສານ ແລະ ກາປະທັບກ່ຽວກັບວຽກງານຢາປາບສັດຕູພືດ;
10. ສັບປ່ຽນ, ທໍາລາຍ, ເຮັດໃຫ້ຂອງກາງ ຫຼື ຫຼັກຖານ ເສຍຫາຍ;
11. ໝິ່ນປະໝາດ, ນາບຂູ່,ໃຊ້ຄວາມຮຸນແຮງ ຫຼື ທໍາຮ້າຍຮ່າງກາຍ ພະນັກງານ ແລະ ເຈົ້າໜ້າທີ່ກວດກາ ຢາປາບສັດຕູພືດ;
12. ປອມຕົວ ຫຼື ແອບອ້າງເປັນເຈົ້າໜ້າທີ່ ກວດກາຢາປາບສັດຕູພືດ;
13. ສົມຮູ້ຮ່ວມຄິດໃນການປິດບັງ, ຊຸກເຊື່ອງ ແລະ ທໍາລາຍຂໍ້ມູນຫຼັກຖານ ທີ່ພົວພັນກັບຂໍ້ຫ້າມ ຂອງ ດໍາລັດສະບັບນີ້.

**ມາດຕາ 65 ມາດຕະການໂທດເພີ່ມ**

ການກະທໍາຜິດໃນສະຖານເບົາ ຫຼື ໜັກ ທີ່ກໍານົດໄວ້ ໃນມາດຕາ 63 ແລະ 64 ຂອງດໍາ ລັດສະບັບນີ້ ທີ່ມີຜົນກະທົບອັນຮ້າຍແຮງຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ຫຼື ສິ່ງແວດລ້ອມ ຜູ້ກະທໍາຜິດຕ້ອງຖືກ ດໍາເນີນຄະດີ ແລະ ທົດແທນຄືນຕໍ່ຜົນເສຍຫາຍ ຕາມຄໍາຕັດສິນຂອງສານ.

ໃນກໍລະນີມີຄ່າໃຊ້ຈ່າຍໃນການສົ່ງກັບຄືນປະເທດສົ່ງອອກ ຫຼື ບໍາບັດ ແລະ ກໍາຈັດຢາປາບສັດຕູພືດ ຜູ້ລະເມີດຕ້ອງຮັບຜິດຊອບທັງໝົດ.

## ໝວດທີ 10

## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງກະສິກໍາ ແລະ ປ່າໄມ້ ເປັນເຈົ້າການພັນຂະຫຍາຍ ແລະ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ  ຈັດຕັ້ງປະຕິບັດ ດໍາລັດ ສະບັບນີ້ ໃຫ້ມີປະສິດທິຜົນ.

ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດຕົວຈິງຂອງດຳລັດສະບັບນີ້ ແມ່ນ ກຳນົດໄວ້ໃນລະບຽບການ ບົດແນະນຳ ແລະ ຄູ່ມືວິຊາການ ສະເພາະ.

**ມາດຕາ 67 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**